# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

13-16 ທັນວາ 2022
ປີທີ 11
ສະບັບທີ 899


## ກອງປະຊຸມສະພາແຫ່ງຊາດ ພິຈາລະນາກົດໝາຍສະບັບປັບປຸງ ຈຳນວນ 4 ສະບັບ ແລະ ສ້າງໃໝ່ 1 ສະບັບ

(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ໄດ້ດຳເນີນມາເປັນອາທິດທີ 2 ເຊິ່ງເປັນວາລະຂອງການພິຈາລະບັນດາກົດໝາຍ ຈຳນວນ 12 ສະບັບ ເຊິ່ງໃນລະຫວ່າງວັນທີ 12-13 ທັນວາ 2022 ພາຍໃຕ້ການຜັດປ່ຽນກັນເປັນປະທານກອງປະຊຸມຂອງທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານ ສພຊ ແລະ ທ່ານ ຄຳໃບ ດຳລັດ ຮອງປະທານ ສພຊ ໂດຍມີບັນດາທ່ານຮອງປະທານ ສພຊ ເຂົ້າຮ່ວມເປັນຄະນະປະທານຂອງກອງປະຊຸມ.



ໃນວາລະກອງປະຊຸມ, ທ່ານ ໄພວີ ສີບົວລີພາ ລັດຖະມົນຕີກະຊວງຍຸຕິທຳ ໄດ້ຂຶ້ນສະເໜີຮ່າງກົດໝາຍວ່າດ້ວຍທະນາຍຄວາມ (ປັບປຸງ) ແລະ ຮ່າງກົດໝາຍວ່າດ້ວຍທະບຽນສານ (ປັບປຸງ); ທ່ານ ຄຳພັນ ຜົມມະທັດ ປະທານອົງການກວດກາແຫ່ງລັດ ໄດ້ ຂຶ້ນສະເໜີກົດໝາຍວ່າດ້ວຍການກວດກາລັດ (ປັບປຸງ) ແລະ ທ່ານ ປອ. ສຸລິອຸດົງ ສູນດາລາ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ໄດ້ ຂຶ້ນສະເໜີກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ (ປັບປຸງ).

ຈາກນັ້ນ, ໃນວັນທີ 14 ທັນວາ 2022 ເປັນປະທານດຳເນີນກອງປະຊຸມໂດຍທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ແລະ ເຂົ້າຮ່ວມເປັນຄະນະປະທານກອງປະຊຸມໂດຍມີທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍບັນດາຮອງປະທານສະພາແຫ່ງຊາດ ເຊິ່ງກອງປະຊຸມໄດ້ຮັບຟັງການສະເໜີຮ່າງກົດໝາຍວ່າດ້ວຍພິພິທະພັນ (ສ້າງໃໝ່) ຈາກທ່ານນາງ ສວນສະຫວັນ ວິຍະເກດ ລັດຖະມົນຕີຖະແຫລງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ.

ວາລະກອງປະຊຸມ, ປະທານກອງປະຊຸມໄດ້ຕັ້ງຄຳຖາມເຈາະຈີ້ມທັງໃຫ້ທິດຊີ້ນຳໃນການຄົ້ນຄວ້າປະກອບຄຳເຫັນ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ກໍໄດ້ເອົາໃຈໃສ່ໃນການຄົ້ນຄວ້າປະກອບຄຳຄິດ

ອ່ານຕໍ່ໜ້າ 8

## ຖະແຫລງຂ່າວຜົນສຳເລັດການພິຈາລະນາ ວຽກງານຂົງເຂດວັດທະນະທຳ-ສັງຄົມ



(ສພຊ) ໃນຕອນເຊົ້າຂອງວັນທີ 13 ທັນວາ 2022, ທ່ານ ຄຳໃບ ດຳລັດ ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ໄດ້ຖະແຫລ່ງຂ່າວຕໍ່ສື່ມວນຊົນທຸກຂະແໜງການກ່ຽວກັບຜົນສຳເລັດການພິຈາລະນາບົດລາຍງານຂອງລັດຖະບານ ກ່ຽວກັບການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ວຽກເຮັດງານທຳໃຫ້ປະຊາຊົນບັນດາເຜົ່າ ເພື່ອແກ້ໄຂບັນຫາການວ່າງງານ ເຊິ່ງທ່ານໄດ້ກ່າວ

ອ່ານຕໍ່ໜ້າ 8

## ຄະນະສັນຕິພາບ ແລະ ສາມັກຄີ ຂອງລາວ ແລະ ກອງທຶນສາທາລະນະສາກົນ ເຊັນບົດບັນທຶກຮ່ວມກັນ



ໜ້າ 7

## ຮອງປະທານສະພາແຫ່ງຊາດ ເຂົ້າຮ່ວມ ພິທີເປີດງານມະຫາກຳກິລາແຫ່ງຊາດ ຄັ້ງທີ XI

(ສພຊ) ງານມະຫາກຳກິລາແຫ່ງຊາດ ຄັ້ງທີ XI ຫລື ຊຽງຂວາງເກມ 2022 ໄດ້ເປີດຂຶ້ນຢ່າງເປັນທາງການ ໃນວັນທີ 13 ທັນວາ 2022, ເຂົ້າຮ່ວມມີທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດ ແຫ່ງ ສປປລາວ, ທ່ານ ພົທ. ສຸວອນ ເລືອງບຸນມີ ຮອງປະທານສະ

ອ່ານຕໍ່ໜ້າ 2



## ລາຍງານຄວາມຄືບໜ້າການແກ້ໄຂ ຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ

(ສພຊ) ໃນວັນທີ 8 ທັນວາ ຜ່ານມາ, ທ່ານ ສອນໄຊ ສີພັນດອນ ຮອງນາຍົກລັດຖະມົນຕີ ໄດ້ລາຍງານຄວາມຄືບໜ້າການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ (2021-2023) ເຊິ່ງທ່ານໄດ້ລາຍງານໃຫ້ຮູ້ວ່າ: ກ່ຽວກັບສະພາບການຈັດຕັ້ງປະຕິບັດບັນດາວຽກງານຈຸດສຸມຂອງວາລະແຫ່ງຊາດ

ອ່ານຕໍ່ໜ້າ 2



## ປະທານ ກຕທ ຕ້ອນຮັບເອກອັກຄະລັດຖະທູດ ສ.ເກົາຫລີ

(ສພຊ) ວັນທີ 8 ທັນວາ ຜ່ານມາ, ທີ່ສະພາແຫ່ງຊາດ ນະຄອນຫລວງວຽງຈັນ, ທ່ານ ສັນຍາ ປຣະເສີດ ປະທານກຳມາທິການການຕ່າງປະເທດ (ກຕທ) ໄດ້ຕ້ອນຮັບການເຂົ້າພົບປະຂອງທ່ານ ຈອງ ຢອງ ຊູ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ.ເກົາຫລີ ປະຈຳ ສປປລາວ ໃນໂອກາດທີ່ທ່ານໄດ້ຮັບຕຳແໜ່ງເປັນເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສ.ເກົາຫລີ ຄົນໃໝ່ ປະຈຳ ສປປລາວ ເຊິ່ງຈຸດປະສົງຂອງການເຂົ້າພົບປະຄັ້ງນີ້ແມ່ນເພື່ອສະເໜີຕົວ ແລະ ປຶກສາຫາລືກ່ຽວກັບການເສີມສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືທີ່ດີງາມມາແຕ່ດົນນານ ລະຫວ່າງ ສປປ ລາວ ແລະ ສ.ເກົາຫລີ ກໍຄືການພົວພັນຮ່ວມມື ລະຫວ່າງສະພາແຫ່ງຊາດ

ອ່ານຕໍ່ໜ້າ 2

## 11 ເດືອນ ສາມາດແກ້ໄຂມ້າງຄະດີຢາເສບຕິດໄດ້ 4.707 ຄະດີ

(ສພຊ) ໃນວັນທີ 8 ທັນວາ 2022 ພົອ. ວິໄລ ຫລ້າຄຳຟອງ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ວ່າ: ໃນ 11 ເດືອນຜ່ານມາ (ມັງກອນ-ພະຈິກ ປີ 2022) ບັນຫາຢາເສບຕິດ ເກີດຂຶ້ນມີລັກສະນະຕໍ່ເນື່ອງ-ຮຸນແຮງ, ເຄື່ອນໄຫວເປັນກຸ່ມແກ໊ງ, ມີເຄືອຄ່າຍເຊື່ອມໂຍງກັບພາຍໃນ ແລະ ຕ່າງປະເທດ, ນຳໃຊ້ອາວຸດເສິກ, ພາຫະນະ, ອຸປະກອນເຄື່ອງມືທີ່ທັນສະໄໝ ສາມາດຕອບໂຕ້ກັບເຈົ້າໜ້າທີ່. ໂດຍສືບຕໍ່ຈັດຕັ້ງປະຕິບັດຄຳສັ່ງ ເລກທີ 02/ກມສພ ວ່າດ້ວຍການເພີ່ມທະວີການນຳພາ-ຊີ້ນຳຂອງຄະນະ

ອ່ານຕໍ່ໜ້າ 7


ໜ້າ 4


ໜ້າ 4


ໜ້າ 4


ໜ້າ 5


ໜ້າ 5


ໜ້າ 5

**ຊົມເຊີຍກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!**



## ປະທານ...

ລາວ ແລະ ສະຖານເອກອັກຄະລັດຖະທູດ ແຫ່ງ ສ.ເກົາຫລີ ປະຈຳ ສປປລາວ.

ໃນໂອກາດນີ້, ທ່ານປະທານກຳມາທິການການຕ່າງປະເທດ ໄດ້ສະແດງຄວາມຍິນດີຕ້ອນຮັບທ່ານ ຈອງ ຢອງ ຊູ ແລະ ຊົມເຊີຍທ່ານທີ່ໄດ້ຮັບການແຕ່ງຕັ້ງມາປະຕິບັດໜ້າທີ່ການທູດ ຢູ່ ສປປລາວ ແລະ ອວຍພອນໃຫ້ທ່ານປະສົບຜົນສຳເລັດໃນການປະຕິບັດໜ້າທີ່ວຽກງານການທູດຂອງທ່ານ ຢູ່ ສປປລາວ ເຊິ່ງເປັນການປະກອບສ່ວນເພີ່ມພູນຄູນສ້າງສາຍພົວພັນມິດຕະພາບ ແລະ ການຮ່ວມມືລະຫວ່າງ ສປປລາວ ແລະ ສ.ເກົາຫລີ, ລະຫວ່າງ 2 ອົງການນິຕິບັນຍັດຂອງ 2 ປະເທດ ໃຫ້ນັບມື້ນັບຂະຫຍາຍຕົວຍິ່ງຂຶ້ນ.

ຕະຫລອດໄລຍະຜ່ານມາການພົວພັນຮ່ວມມື ລະຫວ່າງສອງປະເທດ ໄດ້ຮັບການເສີມຂະຫຍາຍເປັນກ້າວໆ ເຊິ່ງສະແດງອອກດ້ວຍການແລກປ່ຽນຄະນະຜູ້ແທນໄປ-ມາຫາສູ່ກັນໃນຫລາຍຂັ້ນ-ຫລາຍລະດັບ ແລະຮ່ວມມືໃນຂະແໜງການຕ່າງໆ ເປັນຕົ້ນແມ່ນການຮ່ວມມືດ້ານການພັດທະນາເສດຖະກິດ-ສັງຄົມ, ການສຶກສາ, ກະສິກຳ, ການທ່ອງທ່ຽວ, ແຮງງານ, ການຄ້າ-ການລົງທຶນ ແລະ ຂະແໜງການອື່ນໆ, ສອງຝ່າຍຍັງໄດ້ມີການຮ່ວມມື ແລະ ສະໜັບສະໜູນເຊິ່ງກັນແລະກັນ ໃນເວທີພາກພື້ນ ແລະ ສາກົນ; ສຳລັບການພົວພັນຮ່ວມມື ລະຫວ່າງ ສະພາແຫ່ງຊາດລາວ ແລະ ສະພາແຫ່ງຊາດ ແຫ່ງ ສ.ເກົາຫລີ ກໍໄດ້ຮັບການເສີມຂະຫຍາຍດີຂຶ້ນຢ່າງຕໍ່ເນື່ອງ, ການແລກປ່ຽນຢ້ຽມຢາມຄະນະຜູ້ແທນລະດັບສູງຂອງສອງສະພາ, ລະດັບຂັ້ນກຳມາທິການ, ຄະນະເລຂາທິການ ແລະ ຄະນະມິດຕະພາບລັດຖະສະພາ ລາວ-ສ.ເກົາຫລີ-ລາວ; ນອກນີ້, ສອງສະພາແຫ່ງຊາດກໍໄດ້ມີການສະໜັບສະໜູນ ເຊິ່ງກັນແລະກັນ ໃນເວທີພາກພື້ນ ແລະ ສາກົນ ເປັນຕົ້ນແມ່ນໃນເວທີຂອງ IPU, ASEP, APPF, AIPA ແລະ ເວທີອື່ນໆ ເພື່ອປະກອບສ່ວນໃນການສິ່ງເສີມສັນຕິພາບ, ສະຖຽນລະພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາ ໃນພາກພື້ນ ແລະ ໃນໂລກ.

ໃນໂອກາດນີ້, ທ່ານປະທານກຳມາທິການການຕ່າງປະເທດ ຍັງໄດ້ໃຫ້ແຈ້ງຮູ້ຕື່ມວ່າ: ສະພາແຫ່ງຊາດລາວ ຊຸດທີ IX ເຊິ່ງມີສະມາຊິກສະພາແຫ່ງຊາດ ທັງໝົດ 164 ທ່ານ ຍິງ 36 ທ່ານ ກວມເອົາ 21,95% ຂອງຈຳນວນສະມາຊິກສະພາແຫ່ງຊາດທັງໝົດ; ສະພາປະຊາຊົນແຂວງ ຊຸດທີ II ມີສະມາຊິກທັງໝົດ 492 ທ່ານ ຍິງ 150 ທ່ານ ກວມເອົາ 30,48% ຂອງຈຳນວນສະມາຊິກສະພາປະຊາຊົນແຂວງທັງໝົດ ແລະ ປັດຈຸບັນ, ສະພາແຫ່ງຊາດ ພວມດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4.

ພ້ອມນັ້ນ, ທ່ານ ຈອງ ຢອງ ຊູ ໄດ້ສະແດງຄວາມດີໃຈທີ່ໄດ້ມີໂອກາດເຂົ້າພົບປະໃນຄັ້ງນີ້; ເຊິ່ງທ່ານໄດ້ສະແດງຄວາມປິຕິຍິນດີທີ່ໄດ້ມາປະຕິບັດໜ້າທີ່ຢູ່ ສປປລາວ, ໄດ້ຕີລາຄາສູງຜົນການພົວພັນຮ່ວມມື ລະຫວ່າງ 2 ຝ່າຍ ໃນໄລຍະຜ່ານມາ ແລະ ເນັ້ນເຖິງຄວາມສຳຄັນໃນການຈະສືບຕໍ່ຮ່ວມມືໃນຕໍ່ໜ້າ ໂດຍສະເພາະໃນດ້ານເສດຖະກິດ-ການລົງທຶນ, ແຮງງານ, ການສືບຕໍ່ແລກປ່ຽນການຢ້ຽມຢາມຂອງການນຳຂັ້ນສູງຂອງ 2 ປະເທດ ແລະ ຂອງ 2 ສະພາແຫ່ງຊາດ ແລະ ການຮ່ວມມືໃນຂົງເຂດຕ່າງໆທີ່ເຫັນວ່າ 2 ຝ່າຍມີຄວາມສົນໃຈນຳກັນ.

ໃນຕອນທ້າຍ, ທ່ານ ສັນຍາ ປຣະເສີດ ສະແດງຄວາມຂອບໃຈຢ່າງຈິງໃຈ ຕໍ່ລັດຖະບານ ແລະ ປະຊາຊົນ ສ.ເກົາຫລີ ທີ່ໄດ້ໃຫ້ການຊ່ວຍເຫລືອ ສປປລາວ ໃນຕະຫລອດໄລຍະຜ່ານມາ.

(ຂ່າວ: ສຸພາວັນ ຫອມສະນິດ
ພາບ: ກຸກກິກ ບຸດດາໄຊ)

## ຮອງປະທານ...

ພາແຫ່ງຊາດ, ມີບັນດາທ່ານການນຳຂັ້ນສູນກາງ ແລະ ທ້ອງຖິ່ນ, ຄະນະນັກກິລາ ລວມເຖິງມວນຊົນ ທັງພາຍໃນ ແລະ ຕ່າງປະເທດ.

ທ່ານ ບຸນຈັນ ສິວົງພັນ ເຈົ້າແຂວງໆຊຽງຂວາງ ໄດ້ລາຍງານວ່າ: ງານມະຫາກຳກິລາແຫ່ງຊາດ ແມ່ນການແຂ່ງຂັນກິລາຫລາຍປະເພດຮ່ວມກັນ ປະກອບມີໝວດກິລາສາກົນ ແລະ ກິລາພື້ນເມືອງ ເຊິ່ງຕາມກຳນົດໄດ້ຈັດຂຶ້ນທຸກໆ 3 ປີ ໂດຍຄັດເລືອກແຂວງຜັດປ່ຽນກັນເປັນເຈົ້າພາບ ເພື່ອຊຸກຍູ້ຂະບວນການກິລາກາຍະກຳຢູ່ພາຍໃນປະເທດ ທັງເປັນການປຸກລະດົມສິ່ງເສີມມະຫາຊົນເຂົ້າຮ່ວມຢ່າງກວ້າງຂວາງ ແນໃສ່ເສີມສ້າງສຸຂະພາບ, ມິດຕະພາບ, ການພັດທະນາ, ການຮ່ວມມື ແລະ ຄວາມສາມັກຄີເປັນປຶກແຜ່ນຂອງປວງຊົນລາວທັງຊາດ ທັງເປັນການພັດທະນາຊັບພະຍາກອນມະນຸດຂອງຊາດ, ເປັນການປຸກລະດົມຊາວໜຸ່ມ, ເຍົາວະຊົນ, ນັກຮຽນ-ນັກສຶກສາ ໃຫ້ມີສ່ວນຮ່ວມໃນຂະບວນການຫລິ້ນກິລາ ແລະ ແຂ່ງຂັນກິລາປະເພດຕ່າງໆ ເພື່ອຫ່າງໄກສິ່ງເສບຕິດ ແລະ ປາກົດການຫຍໍ້ທໍ້ຕ່າງໆ ທັງເປັນການເຝິກຝົນຮ່າງກາຍ ແລະ ຈິດໃຈເບີກບານເຂັ້ມແຂງ, ກຽມພ້ອມສືບທອດມູນເຊື້ອພາລະກິດແຫ່ງການປົກປັກຮັກສາແລະສ້າງສາພັດທະນາປະເທດຊາດ.

ທ່ານ ທອງລຸນ ສີສຸລິດ ປະທານປະເທດ ແຫ່ງ ສປປລາວ ໄດ້ກ່າວເປີດງານມະຫາກຳກິລາແຫ່ງຊາດ ຄັ້ງທີ XI ຢ່າງເປັນທາງການ ໂດຍໄດ້ສະແດງຄວາມຊົມເຊີຍຕໍ່ການຫ້າງຫາກະກຽມຄວາມພ້ອມທຸກໆດ້ານຂອງເຈົ້າພາບ ແລະ ຄະນະຮັບຜິດຊອບ, ຊົມເຊີຍທຸກພາກສ່ວນທີ່ສົ່ງນັກກິລາເຂົ້າຮ່ວມແຂ່ງຂັນຢ່າງຕັ້ງໜ້າ ແລະ ມີຄວາມຮັບຜິດຊອບສູງ ພ້ອມທັງເຊື່ອໝັ້ນວ່າງານມະຫາກຳກິລາແຫ່ງຊາດຄັ້ງນີ້ ເປັນການເສີມຂະຫຍາຍຄວາມສາມັກຄີ ແລະ ຄວາມເປັນປຶກແຜ່ນແໜ້ນໜາ ຂອງປວງຊົນລາວທັງຊາດ.

ງານມະຫາກຳກິລາແຫ່ງຊາດຄັ້ງທີ XI ນີ້ ມີລາຍການແຂ່ງຂັນທັງໝົດ 25 ປະເພດກິລາຄື: ຍິງປືນ, ລອຍນໍ້າ, ບານບ້ວງ, ເທຄວັນໂດ, ໝາກແລ້, ຍິງທະນູ, ໜ້າເກັກ, ແລ່ນ-ລານ, ມວຍສາກົນ, ໝາກເສິກ, ປັນຈັກສີລັດ, ມວຍປ້ຳ, ຄາຣາເຕໂດ, ກະຕໍ້-ຊິນລອນ, ບານເຕະ, ໝາກຂ່າງ, ເປຕັງ, ກ໊ອຟ, ດອກປີກໄກ່, ເຕັນນິສ, ລົດຖີບ, ປິງປ໋ອງ, ມວຍລາວ, ຢູໂດ ແລະ ວູຊູ ແລະ ມີນັກກິລາເຂົ້າຮ່ວມການແຂ່ງຂັນ 3.093 ຄົນ ຈາກ 17 ແຂວງ, 1 ນະຄອນຫລວງ ແລະ 4 ກະຊວງ ເປັນຕົ້ນ ກະຊວງປ້ອງກັນປະເທດ,ກະຊວງປ້ອງກັນຄວາມສະຫງົບ, ກະຊວງພະລັງງານ ແລະ ບໍ່ແຮ່ ແລະ ກະຊວງສາທາລະນະສຸກ ເຂົ້າຮ່ວມຊີງຫລຽນທັງໝົດ 2.598 ຫລຽນ. ສຳລັບບາງປະເພດກິລາ ໄດ້ແຂ່ງຂັນມາແຕ່ວັນທີ 14 ພະຈິກ 2022 ຢູ່ນະຄອນຫລວງວຽງຈັນ ຄື: ກິລາລອຍນໍ້າ ແລະ ກິລາຍິງປືນ, ສ່ວນຢູ່ແຂວງຊຽງຂວາງ ເລີ່ມມາແຕ່ວັນທີ 1 ທັນວາ 2022 ແລະ ມາຮອດວັນທີ 13 ທັນວາ 2022 ມີ 11 ປະເພດກິລາແຂ່ງສຳເລັດແລ້ວ ຄື: ກິລາລອຍນໍ້າ, ແລ່ນ-ລານ, ເທຄ້ວນໂດ, ມວຍປ້ຳ, ຍິງທະນູ-ຍິງໜ້າເກັກ, ຄາຣາເຕໂດ, ໝາກເສິກ, ບານບ້ວງ, ປັນຈັກສີລັດ, ມວຍສາກົນ ແລະ ໝາກແລ້ ແລະ ຈະດຳເນີນໄປຈົນຮອດວັນທີ 22 ທັນວາ 2022 ຈຶ່ງຈະສຳເລັດການແຂ່ງຂັນ.

## ຄວາມຄືບ...

ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ

**1. ວຽກຈຸດສຸມການສົ່ງເສີມການຜະລິດ ເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ**

● **ຂະແໜງການຜະລິດກະສິກຳ ແລະ ປ່າໄມ້** ໄດ້ສຸມໃສ່ປັບປຸງປັດໄຈການຜະລິດ ແລະ ສົ່ງເສີມການຜະລິດສິນຄ້າກະສິກຳ ເພື່ອທົດແທນການນຳເຂົ້າ; ໃນນັ້ນ, ໄດ້ສຳເລັດການກຳນົດບັນຊີລາຍການພືດ ແລະ ສັດ ທີ່ສາມາດນຳເຂົ້າ ແລະ ຜະລິດໄດ້ພາຍໃນ ໂດຍສະເພາະແນວພັນເຂົ້າ, ແນວພັນພືດ, ແນວພັນໄມ້ອຸດສາຫະກຳ ແລະ ແນວພັນສັດ, ພ້ອມທັງກຳນົດລາຍການບັນຊີສົ່ງເສີມການຜະລິດສິນຄ້າກະສິກຳ ເພື່ອທົດແທນການນຳເຂົ້າ ຈຳນວນ 9 ຊະນິດພືດຜັກ, ການຜະລິດສະບຽງອາຫານ, ອັນພົ້ນເດັ່ນແມ່ນການຜະລິດເຂົ້າ ເຊິ່ງປີ 2022 ສາມາດຜະລິດໄດ້ເກີນແຜນປີ (3,76 ລ້ານໂຕນ) ແລະ ການຂະຫຍາຍຟາມລ້ຽງສັດ ໂດຍສະເພາະຟາມລ້ຽງງົວ ໄດ້ເປັນຂະບວນການທີ່ກວ້າງຂວາງສົມຄວນ, ດ້ານການປຸງແຕ່ງກະສິກຳ, ໄດ້ຊຸກຍູ້ສົ່ງເສີມຜູ້ປະກອບການຜະລິດຝຸ່ນຊີວະພາບໃຫ້ສາມາດຜະລິດໄດ້ຕາມມາດຕະຖານ ເຊິ່ງມີຈຳນວນ 77 ໂຮງງານ, ສາມາດຜະລິດຝຸ່ນຊີວະພາບໄດ້ ປະມານ 600.000 ໂຕນ/ປີ ຫລື ເທົ່າກັບ 30% ຂອງຄວາມຕ້ອງການໝົດປີ (2 ລ້ານໂຕນ/ປີ). ພ້ອມນັ້ນ, ໄດ້ສົ່ງເສີມການຜະລິດທົ່ວອາຫານສັດ ເຊິ່ງປັດຈຸບັນ ມີຈຳນວນໂຮງງານ 6 ແຫ່ງ ສາມາດຜະລິດໄດ້ 298.200 ໂຕນ ຫລືຕອບສະໜອງປະມານ 50,3% ຂອງຄວາມຕ້ອງການອາຫານສັດພາຍໃນໝົດປີ ຜ່ານການສົ່ງເສີມຄືດັ່ງກ່າວ ໄດ້ເຮັດໃຫ້ມູນຄ່າການນຳເຂົ້າສິນຄ້າກະສິກຳ ໃນປີນີ້ໄດ້ຫລຸດລົງປະມານ 9,54 ລ້ານໂດລາ ທຽບໃສ່ປີ 2021.

ດ້ານການຜະລິດສິນຄ້າກະສິກຳເພື່ອສົ່ງອອກ ໄດ້ເລັ່ງການເຈລະຈາດ້ານສຸຂະນາໄມ ແລະ ສຸຂານາໄມພືດ (SPS) ເພື່ອເປີດຕະຫລາດ ເພີ່ມຕື່ມອີກ 9 ລາຍການ ລວມເປັນ 47 ລາຍການ (ສປ ຈີນ 16 ລາຍການ, ສສ.ຫວຽດນາມ 16 ພືດ ແລະ ໄທ 15 ພືດ) ແລະ ກຳລັງກະກຽມເຊັນເພີ່ມຕື່ມ ກັບ ສປ.ຈີນ ຈຳນວນ 1 ລາຍການພືດ (ໃບຢາສູບແຫ້ງ); ສືບຕໍ່ເຈລະຈາເພື່ອເປີດຕະຫລາດພືດບຸລິມະສິດຄື: ກັບ ສປ ຈີນ 23 ພືດ ແລະ ຜະລິດຕະພັນຊີ້ນ; ຫວຽດນາມ 4 ພືດ ແລະ ໝູ ແລະ ໄທ 5 ພືດ. ພ້ອມນັ້ນ, ໄດ້ເລັ່ງການຈັດຕັ້ງກຸ່ມການຜະລິດເພີ່ມໃໝ່ ໄດ້ທັງໝົດ 170 ກຸ່ມ (ແຜນການ 150 ກຸ່ມ); ຊຸກຍູ້ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ບັນດາຟາມລ້ຽງງົວຢູ່ທ້ອງຖິ່ນຈຳນວນໜຶ່ງເພື່ອສົ່ງອອກໄປສູ່ ສປ.ຈີນ ເຊິ່ງມາຮອດປັດຈຸບັນມີທັງໝົດ 143 ຟາມ, ມີງົວທັງໝົດປະມານ 41.560 ໂຕ. ອັນສຳຄັນແມ່ນໄດ້ພະຍາຍາມສ້າງເງື່ອນໄຂ ແລະ ແກ້ໄຂຂອດຫຍຸ້ງຍາກຕ່າງໆ ເພື່ອຊຸກຍູ້ການຜະລິດ ແລະ ສົ່ງອອກພືດກະສິກຳທີ່ເປັນທ່າແຮງ ເປັນຕົ້ນໝາກກ້ວຍ, ຢາງພາລາ ແລະ ມັນຕົ້ນ ເຊິ່ງໄດ້ເຮັດໃຫ້ມູນຄ່າການສົ່ງອອກຜະລິດຕະພັນກະສິກຳ ໃນປີ 2022 ສາມາດບັນລຸໄດ້ 1.183,4 ລ້ານໂດລາ (ສົ່ງອອກພືດ ປະມານ 1.129,65 ລ້ານໂດລາ ແລະ ສັດລ້ຽງ ປະມານ 53,78 ລ້ານໂດລາ), ເພີ່ມຂຶ້ນ ປະມານ 489,18 ລ້ານໂດລາ ສົມທຽບໃສ່ໄລຍະດຽວກັນ ຂອງປີ 2021.

● **ຂະແໜງການຜະລິດພະລັງງານ ແລະ ບໍ່ແຮ່:**

- ດ້ານການຜະລິດພະລັງງານໄຟຟ້າ ໄດ້ຄົ້ນຄວ້າປັບປຸງລາຄາໄຟຟ້າພາຍໃນຄືນໃໝ່ ເພື່ອຊຸກຍູ້ການນຳໃຊ້ພາຍໃນໃຫ້ສູງຂຶ້ນ; ໄດ້ເຈລະຈາ ແລະ ຊຸກຍູ້ການຮ່ວມມືກັບປະເທດເພື່ອນບ້ານ ໂດຍສະເພາະການແລກປ່ຽນພະລັງງານໄຟຟ້າແບບລະບົບສູ່ລະບົບ (Grid to Grid) ກັບ ສປ.ຈີນ ເພື່ອແກ້ໄຂບັນຫາໄຟຟ້າເຫລືອໃນລະດູຝົນ ແລະ ບໍ່ພໍໃນລະດູແລ້ງ. ພ້ອມນັ້ນ, ໄດ້ເຈລະຈາຂາຍໄຟຟ້າໂດຍກົງຈາກບັນດາໂຄງການເຂື່ອນໄຟຟ້າເອກະຊົນ (IP) ແລະ ຂາຍຜ່ານລະບົບສາຍສົ່ງ ຂອງລັດວິສາຫະກິດໄຟຟ້າລາວໃຫ້ຫລາຍຂຶ້ນ. ໃນປີ 2022 ນີ້, ມູນຄ່າການສົ່ງອອກພະລັງງານໄຟຟ້າສາມາດບັນລຸໄດ້ 1.769 ລ້ານໂດລາ ເພີ່ມຂຶ້ນປະມານ 7,5% ທຽບກັບປີ 2021 ແລະ ມູນຄ່າການນຳເຂົ້າພະລັງງານໄຟຟ້າຈາກປະເທດເພື່ອນບ້ານ ມີພຽງແຕ່ 18 ລ້ານໂດລາ ຫລຸດລົງປະມານ 72,7% ສົມທຽບໃສ່ປີຜ່ານມາ;

- ໄດ້ເອົາໃຈໃສ່ຊຸກຍູ້ບັນດາໂຄງການທົດລອງຂຸດຄົ້ນແຮ່ທາດ ໃຫ້ສາມາດເຄື່ອນໄຫວໄປຕາມແຜນການທີ່ໄດ້ກຳນົດໄວ້, ໂຄງການທົດລອງຂຸດຄົ້ນແຮ່ທາດທີ່ສະເໜີຂໍການລົງທຶນ ມີປະມານ 357 ໂຄງການ ລວມທັງສູນກາງ ແລະ ທ້ອງຖິ່ນ, ໄດ້ເຊັນສັນຍາແລ້ວທັງໝົດ 62 ໂຄງການ (ແຮ່ເຫລັກ 37 ໂຄງການ, ຫີນອ່ອນມາໂບ້ 2 ໂຄງການ, ແຮ່ຄຳເຄົ້າ 4 ໂຄງການ, ຄຳຕົກຂ້ອນ 14 ໂຄງການ ແລະ ແຮ່ຫາຍາກ 5 ໂຄງການ) ແລະ ໄດ້ມອບພັນທະລ່ວງໜ້າ ເປັນຈຳນວນປະມານ 529 ຕື້ກີບ ແລະ 56.818.000 ໂດລາ ເຖິງຢ່າງໃດກໍຕາມ, ການສົ່ງອອກຕົວຈິງຂອງບັນດາໂຄງການທົດລອງທີ່ໄດ້ອະນຸມັດແລ້ວ ເຫັນວ່າບໍ່ຫລາຍ ເຊິ່ງມາຮອດວັນທີ 9 ພະຈິກ 2022 ປະລິມານການສົ່ງອອກແຮ່ເຫລັກຕົວຈິງ ມີພຽງແຕ່ 314.319 ໂຕນ ຫລືເທົ່າກັບ 2,9% ຂອງແຜນສະເໜີຈຳໜ່າຍ ໃນປີ 2022 ແລະ ຈຳໜ່າຍແຮ່ຄຳຕົກຂ້ອນຈຳນວນ 466,76 ກຣາມ ເຊິ່ງໄດ້ມອບພັນທະມອບເໝົາໃຫ້ແກ່ງົບປະມານ (30 ໂດລາ/ໂຕນ) ເປັນມູນຄ່າ 14,74 ລ້ານໂດລາ ແລະ 6,9 ຕື້ກີບ.

● **ຂະແໜງການຜະລິດອຸດສາຫະກຳປຸງແຕ່ງ ເພື່ອການສົ່ງອອກ:** ໄດ້ຊຸກຍູ້ໃຫ້ຂະແໜງການຜະລິດອຸດສາຫະກຳປຸງແຕ່ງທີ່ມີທ່າແຮງໃນການສົ່ງອອກສາມາດດຳເນີນກິດຈະການເຂົ້າສູ່ສະພາບປົກກະຕິ, ເຊິ່ງມູນຄ່າການສົ່ງອອກຂອງຂະແໜງຕັດຫຍິບບັນລຸໄດ້ປະມານ 191 ລ້ານໂດລາ ເພີ່ມຂຶ້ນປະມານ 25% ສົມທຽບໃສ່ປີຜ່ານມາ, ໃນບັນດາເຂດເສດຖະກິດພິເສດສາມາດດຶງດູດເອົາ 80 ບໍລິສັດເຂົ້າມາລົງທຶນ ເປັນມູນຄ່າປະມານ 236,7 ລ້ານໂດລາ ແລະ ທຶນຈົດທະບຽນ 167,9 ລ້ານໂດລາ (ເຂດສາມຫລ່ຽມຄຳ, ເຂດບຶງທາດຫລວງ ແລະ ເຂດກວມລວມໄຊເສດຖາ). ເຖິງຢ່າງໃດກໍ່ຕາມ, ການສົ່ງອອກສິນຄ້າອຸດສາຫະກຳໂດຍລວມຈາກເຂດເສດຖະກິດພິເສດ ເຫັນວ່າບັນລຸໄດ້ພຽງແຕ່ 287,2 ລ້ານໂດລາ ເຊິ່ງມີສາເຫດມາຈາກສະພາບຄວາມບໍ່ແນ່ນອນຂອງເສດຖະກິດໂລກ, ຕົ້ນທຶນການຜະລິດທີ່ສູງຂຶ້ນ (ບັນຫາອັດຕາເງິນເຟີ້ ແລະ ການອ່ອນຄ່າຂອງເງິນກີບ), ການປະຕິບັດມາດຕະການຄວບຄຸມພະຍາດໂຄວິດ-19 ທີ່ເຂັ້ມງວດ ຂອງບາງປະເທດ ແລະ ອື່ນໆ ເຊິ່ງໄດ້ເຮັດໃຫ້ໂຮງງານຈຳນວນໜຶ່ງໄດ້ຢຸດຊົ່ວຄາວ ແລະ ບາງໂຮງງານປິດຖາວອນ; ສືບຕໍ່ເກັບກຳຂໍ້ມູນ ແລະ ຊຸກຍູ້ການສົ່ງອອກໄມ້ຄ້າງໂຮງງານປຸງແຕ່ງໄມ້ຈຳນວນໜຶ່ງຕາມແຈ້ງການສະບັບເລກທີ 885/ນຍ ເຊິ່ງໄດ້ອະນຸຍາດໃຫ້ສົ່ງອອກເປັນບໍລິມາດ ປະມານ 44.587 ແມັດກ້ອນ, ຄິດເປັນມູນຄ່າ ປະມານ 36,79 ຕື້ກີບ ແລະ 6,05 ລ້ານໂດລາ ແລະ ຍັງຄ້າງບໍ່ທັນສົ່ງອອກ ປະມານ 213.592,9 ແມັດກ້ອນ.

● **ຂະແໜງບໍລິການການທ່ອງທ່ຽວ:** ພາຍຫລັງປະຕິບັດມາດຕະການເປີດປະເທດນັບຕັ້ງແຕ່ຕົ້ນເດືອນພຶດສະພາ 2022 ເປັນຕົ້ນມາດ້ວຍຄວາມພະຍາຍາມຂອງຂະແໜງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນຕ່າງໆ ຈຳນວນນັກທ່ອງທ່ຽວຕ່າງປະເທດເຂົ້າມາທ່ຽວເພີ່ມຂຶ້ນ ແລະ ຄາດວ່າໝົດປີ ຈະບັນລຸໄດ້ 1 ລ້ານເທື່ອຄົນ (ຮອດທ້າຍເດືອນກັນຍາ ມີ ຈຳນວນ 644.756 ເທື່ອຄົນ) ແລະ ສ້າງລາຍຮັບໄດ້ເປັນຈຳນວນ ປະມານ 285 ລ້ານໂດລາ.

● **ຂະແໜງບໍລິການຂົນສົ່ງ ແລະ ໂລຊິສຕິກ:** ໄດ້ສືບຕໍ່ເອົາໃຈໃສ່ການພັດທະນາຂະແໜງການບໍລິການຂົນສົ່ງ ແລະ ໂລຊິສຕິກ ຢ່າງຕັ້ງໜ້າ ເຊິ່ງພົ້ນເດັ່ນແມ່ນການບໍລິການຂົນສົ່ງຜ່ານລົດໄຟ ລາວ-ຈີນ ສາມາດບັນລຸໄດ້ 1,45 ລ້ານໂຕນ, ຊຸກຍູ້ການເປີດບໍລິການ 3 ທ່າບົກ (ບົກທ່ານາແລ້ງ, ທ່າບົກສະຫວັນນະເຂດ ແລະ ທ່າບົກວັງເຕົ່າ ແຂວງຈຳປາສັກ) ເຊິ່ງສາມາດສ້າງລາຍຮັບເຂົ້າງົບປະມານ ໃນໄລຍະ 9 ເດືອນຂອງປີ 2022 ໄດ້ປະມານ 74 ຕື້ກີບ.

2. ວຽກຈຸດສຸມດ້ານການສ້າງຄວາມເຂັ້ມແຂງລາຍຮັບງົບປະມານໄດ້ພະຍາຍາມສ້າງຄວາມເຂັ້ມແຂງດ້ານລາຍຮັບງົບປະມານໂດຍປະຕິບັດມາດຕະການ ຕາມຄຳສັ່ງເລກທີ 18/ນຍ ວ່າດ້ວຍການເພີ່ມທະວີການຄຸ້ມຄອງລາຍຮັບ ແລະ ຕ້ານການຮົ່ວໄຫລ ຂອງລາຍຮັບງົບປະມານໂດຍ:

- ໄດ້ພະຍາຍາມປັບປຸງກົນໄກການເກັບລາຍຮັບ ເຊິ່ງສາມາດເກັບລາຍຮັບໄດ້ເພີ່ມຂຶ້ນ ເປັນຕົ້ນເກັບລາຍຮັບຈາກພາຫະນະທີ່ເຂົ້າບໍ່ຖືກຕ້ອງ ແລະ ນຳໃຊ້ບໍ່ຖືກເປົ້າໝາຍ ສາມາດເກັບລາຍຮັບ ໄດ້ 361,36 ຕື້ກີບ; ພ້ອມທັງດັດສົມຜູ້ບໍລິການແຈ້ງພາສີ ແລະ ຜູ້ແຈ້ງພາສີທົ່ວໄປ ເພື່ອອັດຊ່ອງວ່າງການຮົ່ວໄຫລການເກັບລາຍຮັບ; ໄດ້ປັບປຸງກົນໄກການເກັບລາຍຮັບ ແລະ ຄຸ້ມຄອງການນຳເຂົ້ານໍ້າມັນເຊື້ອໄຟ ເຊິ່ງສາມາດເກັບລາຍຮັບເພີ່ມຂຶ້ນ 309 ຕື້ກີບ; ໄດ້ປັບປຸງກົນໄກການເກັບຄ່າບໍລິການຜ່ານຂົວມິດຕະພາບ 3 ແຫ່ງ; ເກັບລາຍຮັບຈາກໂຄງການທົດລອງຂຸດຄົ້ນແຮ່ທາດ ເຊິ່ງໄດ້ມອບພັນທະງົບປະມານແລ້ວ 529 ຕື້ກີບ ແລະ 56.818.000 ໂດລາ ແລະ ໄດ້ເກັບລາຍຮັບຈາກຄ່າລິຂະສິດ ແລະ ພັນທະອາກອນມອບເໝົາຈາກໂຄງການທົດລອງຂຸດຄົ້ນ ແລະ ແລກປ່ຽນຊື້-ຂາຍເງິນຄິບໂຕ 24,5 ລ້ານໂດລາ ລວມທັງຄ່າໄຟຟ້າປະມານ 123 ລ້ານໂດລາຈາກໂຄງການດັ່ງກ່າວ; ລາຍຮັບອັນໃໝ່ແມ່ນການເກັບຄ່າບໍລິການຕູ້ຄອນເທນເນີຜ່ານການຂົນສົ່ງລົດໄຟລາວຈີນ ຈຳນວນ 13,73 ຕື້ກີບ.

- ຂະຫຍາຍການນຳໃຊ້ເຄື່ອງມືທັນສະໄໝໃນການແຈ້ງພາສີແບບເອເລັກໂທນິກ (ລວມທັງການນຳເຂົ້ານໍ້າມັນເຊື້ອໄຟ); ຍົກລະດັບລະບົບແຈ້ງພາສີ ASYCUDA ເປັນລະບົບແຈ້ງພາສີເອເລັກໂທນິກປະຕູດຽວ (Lao National Single Window); ໄດ້ຊຸກຍູ້ໃຫ້ຫົວໜ່ວຍທຸລະກິດແຈ້ງອາກອນຜ່ານລະບົບທັນສະໄໝ

ອ່ານຕໍ່ສະບັບໜ້າ...

# ຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ

ອ່ານຕໍ່ຈາກສະບັບກ່ອນ...

**II. ຕໍ່ກັບທິດທາງແຜນການປີ 2023**

ຕໍ່ກັບທິດທາງແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານ ແລະ ແຜນເງິນຕາປີ 2023 ທີ່ໄດ້ກຳນົດຄາດໝາຍສູ້ຊົນ, ແຜນວຽກຈຸດສຸມ ແລະ ມາດຕະການຈັດຕັ້ງປະຕິບັດ, ຄະນະປະຈຳສະພາແຫ່ງຊາດ ສະແດງຄວາມຊົມເຊີຍຕໍ່ການປະສານສົມທົບແຕ່ຫົວທີ ລະຫວ່າງກຳມາທິການຂອງສະພາແຫ່ງຊາດ ແລະ ກະຊວງກ່ຽວຂ້ອງຂອງລັດຖະບານ ໃນການສ້າງແຜນ ແລະ ການກະກຽມບັນຊີໂຄງການລົງທຶນຂອງລັດ ເຊິ່ງໂດຍພື້ນຖານແລ້ວເຫັນວ່າ ມີຄວາມສອດຄ່ອງກັບສະພາບເສດຖະກິດ-ສັງຄົມຕົວຈິງຂອງປະເທດເຮົາ.

ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປະຈຳປີ 2023 ໃຫ້ບັນລຸໄດ້ຕາມແຜນ, ຄະນະປະຈຳສະພາແຫ່ງຊາດ ສະເໜີໃຫ້ລັດຖະບານເອົາໃຈໃສ່ເພີ່ມເຕີມ ດັ່ງນີ້:

1) ເອົາໃຈໃສ່ແກ້ໄຂຂໍ້ຄົງຄ້າງ, ອຸປະສັກ ແລະ ຂອດອຸດຕັນ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ໃນໄລຍະຜ່ານມາ ຄືດັ່ງບົດລາຍງານຂອງລັດຖະບານ ແລະ ພິຈາລະນາຄຳເຫັນຂອງ ບັນດາຜູ້ແທນກອງປະຊຸມສະໄໝສາມັນເທື່ອທີ 4 ໃຫ້ມີບາດກ້າວບຸກທະລຸ, ການມີສ່ວນຮ່ວມຂອງປະຊາຊົນ ແລະ ບັນດາການຈັດຕັ້ງທີ່ກ່ຽວຂ້ອງ ລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ເລິກເຊິ່ງ ແລະ ກວ້າງຂວາງຫລາຍຂຶ້ນ;

2) ເອົາໃຈໃສ່ຕິດຕາມສະພາບເສດຖະກິດໂລກຢ່າງໃກ້ຊິດ ຫັນເອົາສິ່ງທ້າທາຍເປັນກາລະໂອກາດໃນການພັດທະນາປະ ເທດເຮົາ ເພື່ອມີມາດຕະການຮັບມືແຕ່ຫົວທີ ແລະ ທັນການ;

3) ເອົາໃຈໃສ່ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ໃຫ້ເປັນວຽກບຸລິມະສິດຂອງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃຫ້ມີຄວາມຄືບໜ້າຫລາຍຂຶ້ນເພື່ອຮັບປະກັນບໍ່ໃຫ້ປະເທດຂອງພວກເຮົາເຂົ້າສູ່ວິກິດ, ໃນນັ້ນຕິດພັນກັບການປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຂໍ້ຫຍຸ້ງຍາກດ້ານເສດຖະກິດ, ສະເໜີໃຫ້ລັດຖະບານເອົາໃຈໃສ່ສ້າງແຜນ ແລະ ຄົ້ນຄວ້າມາດຕະການໃນການຈັດຫາແຫລ່ງທຶນກູ້ຢືມ ຈຳນວນ 41.152 ຕື້ກີບ ດ້ວຍການລະດົມແຫລ່ງທຶນຈາກພາຍໃນເປັນຕົ້ນຕໍ; ຄົ້ນຄວ້າຂໍ້ສະເໜີຕໍ່ການປະຕິຮູບບັນດາລັດວິສາຫະກິດທີ່ຫລຸບທຶນຢ່າງຈິງຈັງ; ເອົາໃຈໃສ່ແກ້ໄຂຜົນການກວດສອບ ແລະ ການກວດກາຢ່າງເຂັ້ມງວດ ແລະ ເດັດຂາດຕາມກົດໝາຍ, ຮັບປະກັນຫລັກການຂອງວາລະແຫ່ງຊາດ ທີ່ໄດ້ກຳນົດ ຄື: ໂປ່ງໃສ, ເດັດຂາດ ແລະ ເປັນມືອາຊີບໃຫ້ເຂັ້ມງວດ ແລະ ມີຜົນສັກສິດ ຢ່າງແທ້ຈິງ;

4) ເອົາໃຈໃສ່ການຄຸ້ມຄອງງົບປະມານແຫ່ງລັດ ໂດຍສະເພາະການຈັດເກັບລາຍຮັບຂອງຖານລາຍຮັບທີ່ມີຢູ່ປະຈຸບັນໃຫ້ຄົບຖ້ວນ ຕາມມະຕິສະພາແຫ່ງຊາດ ຄື ສູ້ຊົນໃຫ້ໄດ້ 16,44% ຂອງ GDP, ແກ້ໄຂຜົນກວດສອບ ແລະ ກວດກາຕາມທີ່ໄດ້ກຳນົດໃນກົດໝາຍ, ພິຈາລະນາຜົນກວດສອບ ແລະ ກວດກາທີ່ພົບເຫັນການລະເມີດກົດໝາຍນັ້ນ ເຂົ້າໃນແຜນງົບປະມານ ປີ 2023, ຂຸດຄົ້ນແຫລ່ງລາຍຮັບໃໝ່ ເພື່ອຮັບປະກັນໃຫ້ຫົວໜ່ວຍງົບປະມານສາມາດກຸ້ມຕົນເອງດ້ານລາຍຮັບ, ຄຸ້ມຄອງລາຍຈ່າຍໃຫ້ມີປະສິດທິຜົນ;

- ຮີບຮ້ອນປັບປຸງກຳນົດໝາຍລາຍຈ່າຍງົບປະມານໃຫ້ສຳເລັດ ແລະ ຮັບປະກັນຄວາມຖືກຕ້ອງ, ສອດຄ່ອງ ແລະ ປະສິດທິຜົນການນຳໃຊ້ງົບປະມານແຫ່ງລັດ;
- ດຳເນີນການເກັບກູ້ຄືນໜີ້ຕ້ອງຮັບ, ອາກອນຄ້າງມອບ ແລະ ຊັບສິນທີ່ຖືກຮິບຈາກການຕັດສິນຂອງສານທີ່ໃຊ້ໄດ້ຢ່າງເດັດຂາດ, ອັດຊ່ອງຫວ່າງການຮົ່ວໄຫລຂອງລາຍຮັບຈາກການປະຕິບັດໜ້າທີ່ຂອງພະນັກງານ, ສັງລວມທຸກປະເພດລາຍຮັບເຂົ້າງົບປະມານໃຫ້ໄດ້ຢ່າງຄົບຖ້ວນຕາມທີ່ກຳນົດໄວ້ໃນມາດຕາ 6 ກົດໝາຍວ່າດ້ວຍ ງົບປະມານແຫ່ງລັດ;
- ຮີບຮ້ອນຈັດສັນງົບປະມານບ້ວງກອງທຶນທາງຈຳນວນ 700 ຕື້ກີບ ສຳລັບປີ 2022 ທີ່ບໍ່ທັນຈັດສັນ, ຮີບຮ້ອນຈັດສັນບັນຊີໂຄງການລົງທຶນຂອງລັດ ແລະ ກຳນົດຫລັກການຈັດສັນງົບປະມານ ໂດຍສະເພາະຕາມໂຄງປະກອບໜີ້ສິນ, ໂຄງການສືບຕໍ່ ແລະ ໂຄງການສະເໜີໃໝ່ໃຫ້ມີຄວາມເໝາະສົມ.

5) ເອົາໃຈໃສ່ຊຸກຍູ້ປຸກລະດົມ ສ້າງສະຕິໃຫ້ທຸກພາກສ່ວນທົ່ວສັງຄົມ ລວມທັງພາກລັດ, ເອກະຊົນ, ຜູ້ປະກອບການ, ນັກຮຽນຮູ້ນັກສຶກສາ, ປັນຍາຊົນ ແລະ ປະຊາຊົນບັນດາເຜົ່າ ໃຫ້ປະຕິບັດນະໂຍບາຍການປະຫຍັດມັດຖະຍັດ ດ້ວຍຄວາມຮັບຜິດຊອບ ແລະ ຕື່ນຕົວສູງ, ສ້າງຄວາມເປັນເຈົ້າຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ເພິ່ງຕົນເອງ, ກຸ້ມຕົນເອງ ແລະ ຍົກສູງຄວາມຮັກຊາດໃຫ້ສູງຂຶ້ນ ໃນສະພາບທີ່ເສດຖະກິດ-ການເງິນມີ ຄວາມຫຍຸ້ງຍາກ;

6) ເອົາໃຈໃສ່ປະຕິບັດຄາດໝາຍດ້ານເງິນຕາ ເພື່ອແນໃສ່ໃຫ້ເສດຖະກິດມະຫາພາກມີຄວາມໝັ້ນທ່ຽງ ແລະ ແກ້ໄຂບັນຫາທີ່ເຄັ່ງຮ້ອນ ໃນປັດຈຸບັນ ໃຫ້ທັນການ ເປັນຕົ້ນ ເງິນເຟີ້, ອັດຕາແລກປ່ຽນ, ລາຄານ້ຳມັນ, ລາຄາສິນຄ້າອຸປະໂພກ-ບໍລິໂພກ, ໄພຫວ່າງງານ ທີ່ກະທົບຕໍ່ຄ່າຄອງຊີບ ແລະ ຊີວິດການເປັນຢູ່ຂອງປະຊາຊົນ;

7) ເອົາໃຈໃສ່ຈັດສັນ ແລະ ຄຸ້ມຄອງແຫລ່ງທຶນຕ່າງໆໃຫ້ຖືກຕ້ອງສອດຄ່ອງຕາມກົດໝາຍ, ຫລັກການ ແລະ ເປົ້າໝາຍການພັດທະນາ, ຄົ້ນຄວ້າລະດົມທຶນຈາກບັນດາພາກສ່ວນເສດຖະກິດພາຍໃນ ແລະ ຕ່າງປະເທດ ເປັນຕົ້ນ ການສົ່ງເສີມການລົງທຶນເອກະຊົນ, ໃຫ້ບູລິມະສິດໃນການປະກອບທຶນສົມທົບໂຄງການ ODA, ການພັດທະນາຕະຫລາດຫລັກຊັບ, ການນຳໃຊ້ກອງທຶນຕ່າງໆ ເພື່ອສະໜອງທຶນໃຫ້ພຽງພໍ ແລະ ຮັບປະກັນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ບັນລຸຕາມແຜນການ;

8) ຄຸ້ມຄອງການລົງທຶນຂອງລັດ ຢ່າງເຂັ້ມງວດ, ລົງທຶນຕາມຄວາມສາມາດໃນການຊຳລະສະສາງ ເປັນຫລັກເພື່ອແບ່ງປັນແຈກຢາຍ; ເອົາໃຈໃສ່ເພີ່ມອັດຕາສ່ວນການແກ້ໄຂໜີ້ສິນໃຫ້ໂຄງການສຳເລັດ 100% ແຕ່ຍັງຄ້າງຊຳລະເປັນຈຳນວນຫລວງຫລາຍ, ຈັດສັນງົບປະມານໃສ່ໂຄງການສືບຕໍ່ທີ່ກຳລັງຈັດຕັ້ງປະຕິບັດໃຫ້ສຳເລັດ; ຄັດຈ້ອນໂຄງການສະເໜີໃໝ່ໃຫ້ເຂັ້ມງວດ, ປະຕິບັດການຊຳລະໂຄງການ ໃຫ້ໄປຕາມມາດຕາ 19 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ; ໂຄງການລົງທຶນຂອງລັດທີ່ປະຕິບັດຢູ່ທ້ອງຖິ່ນ ຕ້ອງຮັບປະກັນການມີສ່ວນຮ່ວມແຕ່ຫົວທີຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ ຕາມມາດຕາ 38 ແລະ 39 ຂອງ ກົດໝາຍວ່າດ້ວຍ ການລົງທຶນຂອງລັດ; ໃນຕໍ່ໜ້າຄວນຄົ້ນຄວ້າ ແລະ ປັບປຸງໂຄງປະກອບການລົງທຶນຂອງລັດ, ການຈັດສັນ ແລະ ແບ່ງປັນຄວນພິຈາລະນາໄປຕາມຂະແໜງການລະຫວ່າງສູນກາງ ແລະ ທ້ອງຖິ່ນ ໃຫ້ມີຄວາມຊັດເຈນ ແລະ ແທດເໝາະກັບສະພາບຕົວຈິງກວ່າເກົ່າ;

9) ເອົາໃຈໃສ່ປະຕິບັດຄາດໝາຍຂະແໜງການເສດຖະກິດ ໃນນີ້ສືບຕໍ່ເອົາໃຈໃສ່ຄົ້ນຄວ້າມາດຕະການການນຳໃຊ້ທ່າແຮງໄດ້ປຽບຂອງປະເທດ ເປັນຕົ້ນ ທາງລົດໄຟ, ທ່າບົກ, ເຂດເສດຖະກິດພິເສດ ແລະ ບັນດາຂະແໜງການເສດ ຖະກິດໃຫ້ເກີດປະໂຫຍດສູງສຸດ, ຊຸກຍູ້ສົ່ງເສີມການຜະລິດພາຍໃນໃຫ້ມີຄວາມເຂັ້ມແຂງ ໂດຍສະເພາະສົ່ງເສີມການ ຜະລິດເພື່ອທົດແທນການນຳເຂົ້າ ແລະ ສົ່ງເສີມການສົ່ງອອກໃຫ້ໄດ້ຫລາຍຂຶ້ນ; ຊຸກຍູ້ບັນດາພາກທຸລະກິດໃຫ້ເຂົ້າເຖິງກອງທຶນກາກບອນ; ຮີບຮ້ອນຄົ້ນຄວ້າສ້າງແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ ຕາມຂອງກົດໝາຍວ່າດ້ວຍທີ່ດິນ ໃຫ້ສຳເລັດ; ປະເມີນຄືນບັນດາໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດໃນຮູບແບບທົດລອງ ໃນໄລຍະຜ່ານມາ ເພື່ອຊອກໃຫ້ເຫັນດ້ານດີ, ດ້ານອ່ອນ, ຜົນໄດ້ ແລະ ຜົນເສຍ ແລະ ວິທີການແກ້ໄຂໃນຕໍ່ໜ້າ ເພື່ອຮັບປະກັນໃນການ ຈັດຕັ້ງປະຕິບັດໂຄງການໃຫ້ມີປະສິດທິພາບ ແລະ ປະສິດທິຜົນ;

10) ສືບຕໍ່ເອົາໃຈໃສ່ປະຕິບັດບັນດາຄາດໝາຍໃນຂົງເຂດວັດທະນະທຳ-ສັງຄົມ, ສິ່ງແວດລ້ອມ ທີ່ບໍ່ທັນບັນລຸຄາດໝາຍ ຕາມມະຕິສະພາແຫ່ງຊາດ ແລະ ບັນດາຄາດໝາຍໃໝ່ທີ່ຈະກຳນົດໃນແຜນປີ 2023 ໃຫ້ບັນລຸຕາມແຜນ; ຄົ້ນຄວ້າເພີ່ມການຈັດສັນງົບປະມານໃຫ້ຂະແໜງການວັດທະນະທຳສັງຄົມ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ປະມານ 200 ຕື້ກີບ ເພື່ອໃຫ້ບັນລຸຄາດໝາຍທີ່ກຳນົດໄວ້ ໃນນັ້ນຈັດສັນໃຫ້ກອງທຶນພັດທະນາບ້ານ, ຮັບປະກັນການພັດທະນາໃຫ້ມີຄວາມດຸນດ່ຽງລະຫວ່າງການພັດທະນາເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ, ໃນນັ້ນຖືເອົາເສດຖະກິດເປັນໃຈກາງ, ສັງຄົມເປັນເປົ້າໝາຍສຳຄັນ ແລະ ສິ່ງແວດລ້ອມເປັນສິ່ງຈຳເປັນ; ສຸມໃສ່ສ້າງພື້ນຖານໂຄງລ່າງຂອງການສຶກສາ ຢ່າງເໝາະສົມ, ຈັດສັນໂກຕາລັດຖະກອນໃໝ່ ແລະ ມີນະໂຍບາຍຕໍ່ຄູອາສາ ແລະ ແພດອາສາ ໂດຍສະເພາະຢູ່ເຂດຫ່າງໄກສອກຫລີກ, ສະໜອງອຸປະກອນການຮຽນ-ການສອນ ແລະ ປຶ້ມຕຳລາຮຽນ ໃນສາຍສາມັນສຶກສາ ໃຫ້ທຸກໂຮງຮຽນຢ່າງທົ່ວເຖິງ, ສຸມໃສ່ແກ້ໄຂບັນຫາການປະລະການຮຽນ ໃນທຸກຊັ້ນທຸກສາຍຂອງການສຶກສາ ແລະ ສົ່ງເສີມໃຫ້ນັກຮຽນຈົບມັດທະຍົມຕອນຕົ້ນ-ຕອນປາຍ ເຂົ້າຮຽນຕໍ່ສາຍອາຊີວະສຶກສາ, ອົບຮົມວິຊາຊີບ ແລະ ການສຶກສາຊັ້ນສູງໃຫ້ຫລາຍຂຶ້ນ; ຮີບຮ້ອນຄົ້ນຄວ້າ ພິຈາລະນາການກຳນົດພະລາກອນຄູ ເພື່ອສ້າງລະບົບທົດແທນອັດຕາການສູນເສຍຄູໃນຮູບແບບຕ່າງໆໃນແຕ່ລະປີ; ເອົາໃຈໃສ່ວຽກງານໂພຊະນາການໃຫ້ສາມາດບັນລຸຄາດໝາຍການຂາດສານອາຫານໃນເດັກ; ປັບປຸງລະບົບປະກັນສຸຂະພາບ ໂດຍໃຫ້ຜູ້ມີເງື່ອນໄຂຕ້ອງປະກອບສ່ວນຈ່າຍເບ້ຍປະກັນເຂົ້າກອງທຶນປະກັນສຸຂະພາບເພື່ອເຮັດໃຫ້ກອງທຶນເຂັ້ມແຂງ ແລະ ຍືນຍົງ; ຊຸກຍູ້ ແລະ ສົ່ງເສີມບັນດາພາກສ່ວນທຸລະກິດໃຫ້ສືບຕໍ່ລົງທຶນພັດທະນາພື້ນຖານໂຄງລ່າງ, ອະນຸລັກ ແລະ ຟື້ນຟູ ແຫລ່ງທ່ອງທ່ຽວຢ່າງມີຈຸດສຸມ; ຄົ້ນຄວ້າປັບປຸງຄ່າແຮງງານຂັ້ນຕ່ຳ ໃຫ້ເໝາະສົມກັບສະພາບຄ່າຄອງຊີບໃນປັດຈຸບັນ, ປັບປຸງຖານຂໍ້ມູນແຮງງານໃຫ້ເປັນລະບົບ; ສຸມໃສ່ການສ້າງວິຊາຊີບ, ການພັດທະນາສີມື ແຮງງານໃຫ້ມີຄຸນະພາບ ແລະ ມີວິໄນແຮງງານ;

11) ເອົາໃຈໃສ່ປະເມີນຄວາມຄືບໜ້າ ແລະ ສືບຕໍ່ເອົາໃຈໃສ່ປະຕິບັດວຽກຈຸດສຸມພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໃນເຂດຈຸດສຸມ ແລະ ເມືອງເປົ້າໝາຍ ທີ່ໄດ້ກຳນົດໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້;

12) ເອົາໃຈໃສ່ຊຸກຍູ້ການປະຕິບັດສັນຍາສັນຍາສະໜອງສິນຄ້າ, ພະລັງງານ ທີ່ ສປປລາວ ມີພັນທະກັບຕ່າງປະເທດ; ເປັນເຈົ້າການໃນການຈັດຕັ້ງປະຕິບັດ, ຕິດຕາມ ແລະ ປະເມີນຜົນການຊ່ວຍເຫລືອ ແລະ ໂຄງການລົງທຶນຈາກຕ່າງປະເທດ ເພື່ອປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີປະສິດທິຜົນສູງສຸດ; ຊຸກຍູ້, ຕິດຕາມກວດກາ ແລະ ປະເມີນການຈັດຕັ້ງປະຕິບັດສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປລາວ ເປັນພາຄີ ໃນຂົງເຂດເສດຖະກິດ, ການຄ້າ ແລະ ການລົງທຶນ;

13) ເອົາໃຈໃສ່ການຄຸ້ມຄອງບໍລິຫານລັດດ້ວຍກົດໝາຍໃຫ້ມີຜົນສັກສິດ ແລະ ແກ້ໄຂປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນທຸກຂົງເຂດຂອງສັງຄົມໃຫ້ໄປຕາມກົດໝາຍ, ຕາມຫລັກການເດັດຂາດ, ໂປ່ງໃສ ແລະ ມືອາຊີບ, ມີປະສິດທິພາບ, ປະສິດທິຜົນສູງ ແລະ ມີຄວາມເຂັ້ມງວດ ໂດຍສະເພາະປະຕິບັດມາດຕະການເດັດຂາດຕໍ່ຫົວໜ່ວຍງົບປະມານ ທີ່ລະເມີດວິໄນແຜນການ-ການເງິນ; ເອົາໃຈໃສ່ປະຕິບັດວຽກງານ 3 ສ້າງ ຕິດພັນກັບຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາໃຫ້ມີຈຸດສຸມ, ມີການແບ່ງຂັ້ນຄຸ້ມຄອງ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ຢ່າງຈະແຈ້ງ ເພື່ອສ້າງຄວາມເຂັ້ມແຂງໃຫ້ອົງການປົກຄອງຂັ້ນທ້ອງຖິ່ນ ມີຄວາມເປັນເຈົ້າການຫລາຍຂຶ້ນໃນການພັດທະນາທ້ອງຖິ່ນ.

# ຄາດໝາຍດ້ານເງິນຕາ ປີ 2023 ຈະຄວບຄຸມອັດຕາເງິນເຟີ້ສະເລ່ຍໝົດປີ ໃຫ້ຢູ່ໃນລະດັບບໍ່ເກີນ 9%

ອ່ານຕໍ່ຈາກສະບັບກ່ອນ...

3. ສົມທົບກັບພາກສ່ວນກ່ຽວຂ້ອງສຳເລັດການສ້າງກົນໄກຈັດຕັ້ງປະຕິບັດ ແລະ ຕິດຕາມກວດກາການປະຕິບັດເງື່ອນໄຂຊຳລະຜ່ານລະບົບທະນາຄານ ສຳລັບການໂອນກຳມະສິດນຳໃຊ້ທີ່ດິນ ແລະ ພາຫະນະ ເພື່ອປະກອບສ່ວນສ້າງເງື່ອນໄຂຫລຸດຜ່ອນການນຳໃຊ້ເງິນຕາຕ່າງປະເທດໃນຮູບແບບເງິນສົດ ແລະ ການຊຳລະສະສາງເປັນເງິນຕາຕ່າງປະເທດນອກລະບົບທະນາຄານ.

**ການຮັກສາສະຖຽນລະພາບທາງດ້ານການເງິນ:**

- ໄດ້ຮັບຮອງແຜນວຽກຍຸດທະສາດເພື່ອແກ້ໄຂບັນຫາໜີ້ບໍ່ເກີດດອກອອກຜົນ (NPLs) ທົ່ວລະບົບທະນາຄານ;
- ສືບຕໍ່ພັດທະນາລະບົບການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ ກໍຄືການຄຸ້ມຄອງຕາມຄວາມສ່ຽງ ເຊິ່ງໄດ້ສຳເລັດໂດຍພື້ນຖານການປັບປຸງຮ່າງຂໍ້ຕົກລົງ ວ່າດ້ວຍການຮັກສາຄວາມພຽງພໍຂອງທຶນ, ຂໍ້ຕົກລົງວ່າດ້ວຍການບໍລິຫານສະພາບຄ່ອງ ແລະ ຂໍ້ຕົກລົງວ່າດ້ວຍການບໍລິຫານອົງກອນ, ຄູ່ມືການຄຸ້ມຄອງຕາມຄວາມສ່ຽງ, ປັບປຸງລະບົບເຕືອນໄພລ່ວງໜ້າ ແລະ ການທົດສອບພາວະວິກິດ; ສຳເລັດການແຈ້ງທະນາຄານທຸລະກິດໃຫ້ລາຍງານການປະເມີນຊ່ອງວ່າງໃນການຫັນໄປນຳໃຊ້ຫລັກການບາເຊວ II ແລະ ຄວາມຄືບໜ້າໃນການກະກຽມຈັດຕັ້ງປະຕິບັດຫລັກການບາເຊວ II ໃຫ້ທະນາຄານແຫ່ງ ສປປລາວ ເປັນປະຈຳໄຕມາດ. ຮອດທ້າຍເດືອນກັນຍາ, ການພັດທະນາລະບົບການຄຸ້ມຄອງທະນາຄານທຸລະກິດຕາມມາດຕະຖານບາເຊວ ສາມາດບັນລຸໄດ້ 80,12% ຂອງແຜນປະຈຳປີ ແລະ 46,60% ຂອງແຜນພັດທະນາໄລຍະ 10 ປີ (2017-2026). ນອກຈາກນັ້ນ, ໄດ້ເລີ່ມຄົ້ນຄວ້າສ້າງລະບົບການຈັດອັນດັບທະນາຄານ ທາງດ້ານຄວາມໝັ້ນຄົງຂອງລະດັບການຖືກຄຸ້ມຄອງໂດຍຜູ້ຄຸ້ມຄອງ ຕໍ່ກັບທະນາຄານທຸລະກິດແຕ່ລະແຫ່ງ;
- ໄດ້ເອົາໃຈໃສ່ຕິດຕາມ ແລະ ຊຸກຍູ້ການເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນຕ່ຳສຸດຂອງທະນາຄານທຸລະກິດ ແລະ ສາຂາທະນາຄານທຸລະກິດຕ່າງປະເທດ ເພື່ອສ້າງຄວາມເຂັ້ມແຂງໃຫ້ທະນາຄານທຸລະກິດ; ເຊິ່ງທະນາຄານທຸລະກິດ ຈຳນວນ 27 ແຫ່ງ ທີ່ມີແຜນເພີ່ມທຶນຈົດທະບຽນ ແລະ ເງິນລົງທຶນ ໂດຍສ່ວນໃຫຍ່ແມ່ນໄດ້ປະຕິບັດຕາມແຜນກຳນົດ. ຮອດເດືອນກັນຍາ 2022, ທະນາຄານທຸລະກິດ ຈຳນວນ 23 ແຫ່ງ ໄດ້ດຳເນີນການເພີ່ມທຶນ ລວມເປັນເງິນທັງໝົດ ຈຳນວນ 2.529,60 ຕື້ກີບ ກວມເອົາ 50,54% ຂອງທຶນຈົດທະບຽນ ແລະ ເງິນລົງທຶນທີ່ທະນາຄານທຸລະກິດຕ້ອງເພີ່ມ;
- ສືບຕໍ່ດຳເນີນການປັບປຸງທະນາຄານນະໂຍບາຍ ເພື່ອຫັນເປັນທະນາຄານພັດທະນາຊົນນະບົດ ໃຫ້ມີປະສິດທິຜົນ;
- ຊຸກຍູ້, ຕິດຕາມ ແລະ ກວດກາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານຢ່າງເປັນປົກກະຕິ ດ້ວຍຫລາຍຮູບການ ເປັນຕົ້ນດຳເນີນການວິເຄາະ-ກວດກາຕາມຄວາມສ່ຽງ, ລົງຕິດຕາມກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ຕາມແຜນການ ແລະ ກວດກາສຸກເສີນຕາມຄວາມຮຽກຮ້ອງຂອງວຽກງານຕົວຈິງໃນແຕ່ລະໄລຍະ, ໄລຍະ 9 ເດືອນຕົ້ນປີ 2022, ໄດ້ສຳເລັດການລົງກວດກາທະນາຄານທຸລະກິດ ຈຳນວນ 12 ແຫ່ງ, ບັນລຸໄດ້ 100% ຂອງແຜນການ, ໄດ້ນຳໃຊ້ມາດຕະການຕໍ່ທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ລະເມີດລະບຽບການດ້ວຍການແຈ້ງເຕືອນ ແລະ ປັບໃໝ່ທະນາຄານທຸລະກິດ ລວມທັງໝົດຈຳນວນ 19 ກໍລະນີ, ແຈ້ງເຕືອນສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ຈຳນວນ 19 ແຫ່ງ, ແກ້ໄຂຄຳຮ້ອງທຸກທີ່ຕິດພັນກັບສະຖາບັນການເງິນທີ່ບໍ່ແມ່ນທະນາຄານ 7 ກໍລະນີ, ປັບປຸງສະມາຄົມການເງິນຈຸລະພາກ ແລະ ສະມາຄົມສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ,
- ສືບຕໍ່ສ້າງຄວາມເຂັ້ມແຂງໃຫ້ບັນດາອົງກອນປົ່ນອ້ອມ, ໃນນີ້, ໄດ້ສົ່ງເສີມການຂະຫຍາຍສະມາຊິກຂອງສຳນັກງານປົກປ້ອງເງິນຝາກ ໂດຍສະເພາະການຊຸກຍູ້ບັນດາສະຖາບັນການເງິນຈຸລະພາກທີ່ຮັບຝາກເງິນ ໃນການກະກຽມຄວາມພ້ອມຕ່າງໆ, ກະກຽມຄວາມພ້ອມ ແລະ ດຳເນີນຂະບວນການ ເພື່ອສ້າງຕັ້ງບໍລິສັດລາວບໍລິຫານຊັບສິນ ປ່ຽນແທນສູນບໍລິການເກັບຊື້ໜີ້ ແລະ ຮັບຝາກເກັບໜີ້ ປະກາດນຳໃຊ້ຜະລິດຕະພັນຄະແນນສິນເຊື່ອບຸກຄົນ (Credit Scoring) ພ້ອມກັບການນຳໃຊ້ຜະລິດຕະພັນຂໍ້ມູນການຊົມໃຊ້ໄຟຟ້າ ສຳລັບວຽກງານຂໍ້ມູນຂ່າວສານສິນເຊື່ອ.

ອ່ານຕໍ່ສະບັບໜ້າ...

# ກອດກາຄືນບັນດາເນື້ອໃນທີ່ຈະນຳເຂົ້າຄົ້ນຄວ້າ, ພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 4



(ສພຊ) ໃນຕອນເຊົ້າຂອງວັນທີ 6 ທັນວາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງບໍລິຄຳໄຊ ໄດ້ຈັດກອງປະຊຸມປຶກສາຫາລື, ກວດກາຄືນການກະກຽມບັນດາເນື້ອໃນທີ່ຈະນຳເຂົ້າຄົ້ນຄວ້າ, ພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ II ໂດຍການເປັນປະທານຂອງທ່ານ ໃສຄຳ ທອງລັດ ກຳມະການພັກແຂວງ, ຮອງປະທານສະພາປະຊາຊົນແຂວງ, ມີຫົວໜ້າອະນຸກຳມະການເນື້ອໃນ, ຄະນະປະຈຳສະພາປະຊາຊົນແຂວງ, ເລຂາທິການ, ປະທານ-ຮອງປະທານຄະນະກຳມະການ ແລະ ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານການກະກຽມບັນດາເນື້ອໃນເອກະສານຕ່າງໆຕາມຄວາມຮັບຜິດຊອບຂອງຄະນະກຳມະການ ແລະ ຄະນະເລຂາທິການ ເພື່ອກະກຽມຄວາມພ້ອມໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງບໍລິຄຳໄຊ ຊຸດທີ II ທີ່ຈະໄຂຂຶ້ນໃນໄວໆນີ້. ພ້ອມນີ້, ຜູ້ແທນກອງປະຊຸມຍັງໄດ້ຄົ້ນຄວ້າ, ປຶກສາຫາລື, ປະກອບຄຳຄິດເຫັນຢ່າງກົງໄປກົງມາ ເພື່ອເຮັດໃຫ້ເນື້ອໃນຕ່າງໆມີຄວາມຄົບຖ້ວນ ແລະ ສົມບູນຍິ່ງຂຶ້ນ.

ໂອກາດດຽວກັນນີ້, ປະທານກອງປະຊຸມ ກໍໄດ້ມີຄຳເຫັນ ແລະ ໃຫ້ທິດຊີ້ນຳຕໍ່ກອງປະຊຸມ ແນໃສ່ເຮັດໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ, ເປັນເອກະພາບ, ເອກະສານມີເນື້ອໃນທີ່ຄົບຖ້ວນ, ຮອບດ້ານ, ລະອຽດ, ຈະແຈ້ງ ແລະ ຖືກຕ້ອງ.

(ນາງ ໂສລະຢ່າ ໄຊຍະວົງ)

# ປາຖະກະຖາວັນສຳຄັນຂອງຊາດ-ຂອງພັກ



(ສພຊ) ເມື່ອວັນທີ 1 ທັນວາ 2022 ທີ່ສະໂມສອນໃຫຍ່ແຂວງຄຳມ່ວນ, ທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງ ໄດ້ເປັນປະທານກອງປະຊຸມ ແລະ ປາຖະກະຖາເຜີຍແຜ່ເອກະສານປະຫວັດສາດວັນສຳຄັນຄື: ວັນສະຖາປານາ ສປປລາວ ຄົບຮອບ 47 ປີ (2/12/1975-2/12/2022), ວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 102 ປີ (13/12/1920-13/12/2022) ໂດຍການເຂົ້າຮ່ວມຂອງບັນດາການນຳຂອງແຂວງ, ພະນັກງານອາວຸໂສບຳນານ, ຫົວໜ້າ-ຮອງຫົວໜ້າພະແນກ, ພະນັກງານ, ທະຫານ, ຕຳຫລວດ ຕະຫລອດຮອດນັກສຶກສາເຂົ້າຮ່ວມທັງໝົດ 391 ຄົນ ຍິງ 155 ຄົນ.

ໃນພິທີ, ທ່ານ ບຸນມີ ພິມມະສອນ ໄດ້ເລົ່າຄືນມູນເຊື້ອ, ຄວາມໝາຍສຳຄັນ, 47 ປີແຫ່ງການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ລວມເຖິງຊີວິດ, ການເຄື່ອນໄຫວປະຕິວັດ, ຜົນງານ, ຄຸນງາມຄວາມດີ ແລະ ການເສີມຂະຫຍາຍ, ສືບທອດມໍລະດົກອັນລ້ຳຄ່າຂອງປະທານ ໄກສອນ ພົມວິຫານ ເພື່ອໃຫ້ພະນັກງານຫລັກແຫລ່ງໄດ້ທົບທວນ, ທວນຄືນມູນເຊື້ອ ແລະ ໄຊຊະນະຂອງພາລະກິດແຫ່ງການປົດປ່ອຍຊາດໃນເມື່ອກ່ອນ ກໍຄືຜົນສຳເລັດໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດພາຍໃຕ້ການນຳພາ-ຊີ້ນຳຂອງພັກ-ລັດ ທັງເປັນການເພີ່ມທະວີສຶກສາອົບຮົມພະນັກງານ, ສະມາຊິກພັກ, ທະຫານ, ຕຳຫລວດ ແລະ ປະຊາຊົນບັນດາເຜົ່າ ກ່ຽວກັບນ້ຳໃຈຮັກຊາດ, ມູນເຊື້ອຄວາມສາມັກຄີປອງດອງຂອງປະຊາຊົນບັນດາເຜົ່າ, ນ້ຳໃຈຕໍ່ສູ້ອັນອົງອາດກ້າຫານຂອງກອງທັບ ແລະ ປະຊາຊົນລາວ, ເພື່ອຮ່ຳຮຽນເອົາຄຸນງາມຄວາມດີ, ຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ແບບແຜນວິທີເຮັດວຽກ ແລະ ການດຳລົງຊີວິດ, ຖືເອົາແນວຄິດ ໄກສອນ ພົມວິຫານ ເປັນທິດນຳໃນການຈັດຕັ້ງປະຕິບັດວຽກງານໃຫ້ມີຄຸນນະພາບ ແລະ ມີປະສິດທິຜົນສູງ.

ວັນສຳຄັນແມ່ນສຸມໃສ່ເຝິກຝົນຫລໍ່ຫລອມດ້ານຄຸນທາດການເມືອງ-ຄຸນສົມບັດສິນທຳປະຕິວັດ ໃຫ້ມີຄວາມບໍລິສຸດ ປອດໃສ ເພື່ອເຮັດສຳເລັດພາລະກິດປະຕິວັດທີ່ປະເທດຊາດ ແລະ ປະຊາຊົນມອບໝາຍໃຫ້, ເປັນເຈົ້າການຫັນປ່ຽນຢ່າງແຂງແຮງ ທາງດ້ານແນວຄິດ ຈິນຕະນາການໃຫ້ເລິກເຊິ່ງ ຕໍ່ການນຳພາຂອງພັກ ແລະ ອະນາຄົດອັນສົດໃສຂອງລະບອບປະຊາທິປະໄຕ ປະຊາຊົນ, ສຸມສະຕິປັນຍາ, ເຫື່ອແຮງໃນການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງອົງຄະນະພັກແຂວງ ໃນເຄິ່ງສະໄໝ ໃຫ້ປາກົດຜົນເປັນຈິງ, ເດັດດ່ຽວແກ້ໄຂຂໍ້ຄົງຄ້າງ ແລະ ສິ່ງທ້າທາຍ ໂດຍສະເພາະທາງດ້ານເສດຖະກິດ, ປັບປ່ຽນພຶດຕິກຳໃນການດຳລົງຊີວິດຢ່າງມີສະຕິ, ເຮັດໃຫ້ຊີວິດການເປັນຢູ່ຂອງພະນັກງານ, ສະມາຊິກພັກ, ທະຫານ, ຕຳຫລວດ ແລະ ປະຊາຊົນບັນດາເຜົ່າ ມີຄວາມສະຫງົບ ແລະ ສີວິໄລ.

# ສພຂ ສາລະວັນ ປາຖະກະຖາ 2 ວັນປະຫວັດສາດ ຕິດພັນກັບການເຜີຍແຜ່ເອກະສານສຳຄັນ



(ສພຊ) ເພື່ອເປັນການປະຕິບັດແຈ້ງການຂອງຄະນະໂຄສະນາອົບຮົມແຂວງສາລະວັນ ໃນການຈັດຕັ້ງໂຄສະນາ-ປາຖະກະຖາ ເນື່ອງໃນໂອກາດວັນຊາດທີ 2 ທັນວາ ຄົບຮອບ 47 ປີ ແລະ ວັນຄ້າຍວັນເກີດຂອງປະທານ ໄກສອນ ພົມວິຫານ ຄົບຮອບ 102 ປີ ໃຫ້ເລິກເຊິ່ງ, ກວ້າງຂວາງ ແລະ ທົ່ວເຖິງ ທັງເປັນການທົບທວນທວນຄືນມູນເຊື້ອອັນສະຫງ່າງາມ ແລະ ໄຊຊະນະປະຫວັດສາດຂອງພາລະກິດແຫ່ງການຕໍ່ສູ້ປົດປ່ອຍຊາດໃນເມື່ອກ່ອນ.

ໃນຕອນເຊົ້າຂອງວັນທີ 8 ທັນວານີ້, ຢູ່ທີ່ສະພາປະຊາຊົນແຂວງ (ສພຂ) ສາລະວັນ ໄດ້ຈັດພິທີປາຖະກະຖາວັນທີ່ມີຄວາມໝາຍສຳຄັນຂອງຊາດລາວ ກໍຄືວັນຊາດ 2 ທັນວາ ຄົບຮອບ 47 ປີ (2 ທັນວາ 1975-2 ທັນວາ 2022) ແລະ ວັນຄ້າຍວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 102 ປີ (13 ທັນວາ 1920-13 ທັນວາ 2022), ຕິດພັນກັບການເຜີຍແຜ່ດຳລັດຂອງລັດຖະບານສະບັບເລກທີ 205/ລບ ວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ ແລະ ເຜີຍແຜ່ມະຕິກອງປະຊຸມຄົບຄະນະບໍລິຫານງານພັກແຂວງສາລະວັນ ເປີດກວ້າງຄັ້ງທີ 8 ສະໄໝທີ IX ໂດຍການເຂົ້າຮ່ວມ ແລະ ເຜີຍແຜ່ຂອງທ່ານ ນາງ ສູນໄຖ ໄຊຍະແສງ ຮອງປະທານ ສພຂ, ທ່ານ ສົມພອນ ແສງສຸລີ ເລຂາທິການ ສພຂ, ທ່ານ ສະນັ່ນ ພົມພິສານ ຮອງເລຂາທິການສະພາປະຊາຊົນແຂວງ; ມີພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມຢ່າງພ້ອມພຽງ.

ການປາຖະກະຖາຄັ້ງນີ້ໃຫ້ຮູ້ເຖິງຄວາມໝາຍຄວາມສຳຄັນຂອງວັນຊາດ 2 ທັນວາ ຄົບຮອບ 47 ປີ ມູນເຊື້ອທີ່ສະຫງ່າອົງອາດແຫ່ງການຕໍ່ສູ້ຕ້ານການຮຸກຮານຂອງສັດຕູຈາກພາຍນອກ ແລະ ສ້າງສາພັດທະນາ ໂດຍສືບທອດມູນເຊື້ອອັນອົງອາດຂອງບັນພະບູລຸດດັ່ງກ່າວ, ປະຊາຊົນລາວບັນດາເຜົ່າ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ ໄດ້ສາມັກຄີກັນຕໍ່ສູ້ຢ່າງພິລະອາດຫານຕ້ານການຮຸກຮານ ແລະ ການຄອບຄອງຂອງພວກຈັກກະພັດລ່າເມືອງຂຶ້ນທັງແບບເກົ່າ ແລະ ໃໝ່ ສາມາດປົດປ່ອຍປະເທດຊາດຢ່າງມີໄຊ, ສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍ ໃນວັນທີ 2 ທັນວາ 1975, ລັດປະຊາທິປະໄຕ ປະຊາຊົນແມ່ນລັດທີ່ເກີດຈາກການຕໍ່ສູ້ເສຍສະຫລະອັນໃຫຍ່ຫລວງຂອງປະຊາຊົນລາວບັນດາເຜົ່າ, ລັດທີ່ມາຈາກປະຊາຊົນ, ໂດຍປະຊາຊົນ ແລະ ເພື່ອປະຊາຊົນ; ວັນທີ 2 ທັນວາ ແມ່ນວັນທີ່ມີຄວາມໝາຍສຳຄັນສຳລັບທົ່ວພັກ, ທົ່ວລັດ ແລະ ທົ່ວປວງຊົນລາວ, ແມ່ນວັນແຫ່ງໄຊຊະນະອັນຍິ່ງໃຫຍ່ໃນປະຫວັດສາດແຫ່ງການຕໍ່ສູ້ເປັນພັນໆປີຂອງຊາດລາວ; ແມ່ນວັນທີ່ປະຊາຊົນລາວບັນດາເຜົ່າໄດ້ມີອິດສະຫລະພາບ ແລະ ໄດ້ເປັນເຈົ້າຂອງປະເທດຊາດຢ່າງແທ້ຈິງ; ແມ່ນວັນທີ່ປະເທດລາວໄດ້ມີເອກະລາດຢ່າງສົມບູນ ແລະ ມີອະທິປະໄຕຢ່າງຄົບຖ້ວນ, ມີທີ່ຕັ້ງອັນສົມກຽດ ແລະ ມີຖານະເທົ່າທຽມກັບປະເທດອື່ນໆ ໃນເວທີປະຊາຄົມໂລກ; ວັນທີ 2 ທັນວາແມ່ນວັນແຫ່ງສັນຕິພາບ, ວັນແຫ່ງການກ້າວສູ່ຍຸກສະໄໝໃໝ່ແຫ່ງການສ້າງປະເທດລາວສັນຕິພາບ, ເອກະລາດ, ປະຊາທິປະໄຕ, ເອກະພາບ, ວັດທະນະຖາວອນ.

ໃນໂອກາດນີ້, ຍັງໄດ້ທວນຄືນວັນຄ້າຍວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 102 ປີ ໂດຍຍົກໃຫ້ເຫັນຊີວິດ ແລະ ການເຄື່ອນໄຫວການປະຕິວັດຊາດຂອງປະທານ ໄກສອນ ພົມວິຫານ ຢ່າງລະອຽດອ່ຽວ ທີ່ເຕັມໄປດ້ວຍຄວາມໝາຍສຳຄັນທາງປະຫວັດສາດຂອງຊາດ. ຈາກນັ້ນ, ໄດ້ເຊື່ອມຊຶມດຳລັດຂອງລັດຖະບານ ສະບັບເລກທີ 205/ລບ ວ່າດ້ວຍການປະຢັດ ແລະ ຕ້ານການຟູມເຟືອຍ ເຊິ່ງດຳລັດສະບັບນີ້ ປະກອບມີທັງໝົດ 9 ໝວດ, 54 ມາດຕາ ທີ່ໄດ້ກຳນົດຫລັກການ, ລະບຽບການລວມ, ມາດຕະການໃນການຄຸ້ມຄອງ ແລະ ການນຳໃຊ້ງົບປະມານຂອງລັດ, ແຫລ່ງທຶນ, ຊັບສິນຂອງລັດ, ຊັບພະຍາກອນທຳມະຊາດ, ພະລັງງານທຸກຂົງເຂດ ແນໃສ່ຊຸກຍູ້ສົ່ງເສີມ, ທັງມີສະຕິຕື່ນຕົວ, ຫັນປ່ຽນຈາກສັງຄົມທີ່ມີຄ່ານິຍົມແບບຟູມເຟືອຍ ເປັນສັງຄົມມີການຜະລິດ, ຊົມໃຊ້ຜະລິດຕະພັນພາຍໃນ ເພື່ອແກ້ໄຂສະພາບຄວາມຫຍຸ້ງຍາກຂອງເສດຖະກິດໃນປັດຈຸບັນໃຫ້ດີຂຶ້ນ ທັງເປັນການປະກອບສ່ວນເຂົ້າໃນການປະຕິບັດວາລະແຫ່ງຊາດໃຫ້ບັນລຸ; ເຊື່ອມຊຶມມະຕິກອງປະຊຸມຄົບຄະນະບໍລິຫານງານພັກແຂວງສາລະວັນ ເປີດກວ້າງຄັ້ງທີ 8 ສະໄໝທີ IX ໄດ້ຍົກເນື້ອໃນທີ່ໄດ້ຄົ້ນຄວ້າ, ປຶກສາຫາລື ແລະ ຕີລາຄາການນຳພາຮອບດ້ານຂອງຄະນະບໍລິຫານງານພັກແຂວງ ໃນໄລຍະ 9 ເດືອນຜ່ານມາ, ຄຽງຄູ່ກັບການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແລະ ການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ຍັງຄົງພົບຄວາມຫຍຸ້ງຍາກ ແລະ ຈະຕ້ອງໄດ້ພ້ອມກັນສູ້ຊົນບຸກບືນສືບຕໍ່ຈັດຕັ້ງປະຕິບັດເປັນແຜນອັນລະອຽດທັງເປັນເຈົ້າການຍົກສູງຄວາມຮັບຜິດຊອບປະຕິບັດໜ້າທີ່ການເມືອງໃຫ້ປະກົດຜົນເປັນຈິງ ແລະ ດີຂຶ້ນເປັນກ້າວໆ.

(ດີລຳພົນ ພົມມະຈັນ)

# ສພຂ ໄດ້ຮັບການອຸປະຖຳອຸປະກອນກິລາ

(ສພຊ) ເມື່ອເດືອນພະຈິກ 2022 ຢູ່ທີ່ສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ, ປະທານບໍລິສັດ ມັງກອນເງິນ-ມັງກອນຄຳ ການຄ້າຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ໄດ້ນຳເອົາໝາກບູນຈຳນວນ 4 ຊຸດ (12 ໜ່ວຍ) ຮຸ້ນ kingtiger ລວມມູນຄ່າທັງໝົດ 4,5 ລ້ານກີບ ມອບໃຫ້ສະພາປະຊາຊົນແຂວງຊຽງຂວາງ ໂດຍການກ່າວຮັບຂອງທ່ານ ນາງ ສາຍພູເງິນ ອຸດົມສຸກ ເລຂາທິການສະພາປະຊາຊົນແຂວງ, ມີສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ, ຫົວໜ້າ-ຮອງຫົວໜ້າຂະແໜງ, ພະນັກງານ ສພຂ ແລະ ທີມງານຂອງບໍລິສັດ ເຂົ້າຮ່ວມເປັນສັກຂີພິຍານ.




ໂອກາດດັ່ງກ່າວ, ທ່ານ ນາງ ສາຍພູເງິນ ອຸດົມສຸກ ຍັງໄດ້ມອບໃບກຽດຕິຄຸນໃຫ້ປະທານບໍລິສັດ ມັງກອນເງິນ-ມັງກອນຄຳ ການຄ້າຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ເພື່ອເປັນການສັນລະເສີນ ແລະ ກ່າວສະແດງຄວາມຂອບໃຈ ທີ່ບໍລິສັດດັ່ງກ່າວໄດ້ນຳເອົາໝາກບູນມາມອບໃຫ້ໃນຄັ້ງນີ້ ເພື່ອປະກອບສ່ວນເຂົ້າໃນຂະບວນການກິລາຂອງສະພາປະຊາຊົນແຂວງ, ໃນການເຂົ້າຮ່ວມຂະບວນການຂອງພາກສ່ວນຕ່າງໆທີ່ຈັດຂຶ້ນ ແລະ ໃນໂອກາດໜ້າຫວັງວ່າ ຈະໄດ້ຮັບການຊ່ວຍເຫລືອໃນດ້ານອື່ນໆຈາກບໍລິສັດຕື່ມອີກ.

(ນັກຂ່າວ ສພຂ ຊຽງຂວາງ)

# ສສຊ ໃຫ້ສຳພາດໃນວາລະເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4



ໂອກາດທີ່ໄດ້ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ສື່ມວນຊົນຂອງສະພາແຫ່ງຊາດ ໄດ້ຮ່ວມກັບສະຖານີໂທລະພາບແຫ່ງຊາດ ໄດ້ຈັດການສຳພາດບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງຕ່າງໆທົ່ວປະເທດ ເຊິ່ງທ່ານ ຄຳຟອງ ອິນມານີ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງທີ 3 ແຂວງຫລວງນໍ້າທາ ທັງເປັນປະທານສະພາປະຊາຊົນແຂວງຫລວງນໍ້າທາ ໄດ້ເປີດສາກໃຫ້ສຳພາດກ່ຽວກັບຜົນງານທີ່ພົ້ນເດັ່ນຫລາຍດ້ານໃນໄລຍະກອງປະຊຸມສະໄໝສາມັນເທື່ອທີ 3 ທີ່ສາມາດຍາດມາໄດ້ ເຊິ່ງທ່ານໃຫ້ຮູ້ວ່າ:

**ດ້ານນິຕິກຳ:** ໄດ້ພິຈາລະນາຮັບຮອງເອົາຮ່າງຂໍ້ຕົກລົງຂອງເຈົ້າແຂວງ ຈຳນວນ 3 ສະບັບ ໃນນັ້ນ, 1 ສະບັບພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝວິສາມັນຂອງສະພາປະຊາຊົນແຂວງ.

**ດ້ານການຕົກລົງບັນຫາພື້ນຖານຂອງທ້ອງຖິ່ນ:** ໄດ້ພິຈາລະນາຮັບຮອງເອົາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2022 ຂອງແຂວງ; ພິຈາລະນາຮັບຮອງເອົາການຄຸ້ມຄອງລາຄາສິນຄ້າ ແລະ ການຄຸ້ມຄອງປໍ້ານໍ້າມັນພາຍໃນແຂວງ; ພິຈາລະນາຮັບຮອງເອົາບຸກຄະລາກອນຂອງອົງການປົກຄອງແຂວງ; ພິຈາລະນາຮັບຮອງເອົາບົດລາຍງານກ່ຽວກັບການເຄື່ອນໄຫວວຽກງານໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 2 ຫາກອງປະຊຸມສະໄໝສາມັນເທື່ອທີ 3 ແລະ ແຜນການກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II.

**ດ້ານການຕິດຕາມກວດກາ:** ຄະນະ ສສຊ ປະຈຳເຂດເລືອກຕັ້ງ ຮ່ວມສະພາປະຊາຊົນແຂວງ ຕິດຕາມກວດກາບັນດາໂຄງການລົງທຶນຂອງລັດຖະບານ ຢູ່ຂັ້ນທ້ອງຖິ່ນ ເປັນຕົ້ນແມ່ນຕິດຕາມກວດກາການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ ການຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອ 3 ຂອງສະພາແຫ່ງຊາດ ຊຸດທີ IX ຮ່ວມກັບສະພາແຫ່ງຊາດ, ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິກອງປະຊຸມກອງປະຊຸມສະພາແຫ່ງຊາດ ໃນຂົງເຂດສດຖະກິດ ແລະ ຂົງເຂດຍຸຕິທຳ, ລົງຊຸກຍູ້ຕິດຕາມກວດກາການຈັດຕັ້ງປະຕິບັດບັນດາຄາດໝາຍ ໃນຂົງເຂດສຶກສາທິການ ແລະ ກິລາ, ຕິດຕາມກວດກາແຜນການຟື້ນຟູບປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ຖືກຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້ານໍ້າທາ 1 ເມືອງນາແລ ແຂວງຫລວງນໍ້າທາ, ຕິດຕາມກວດກາການຍົກຍ້າຍຈັດສັນປະຊາຊົນທີ່ຖືກຜົນກະທົບຈາກການກໍ່ສ້າງເສັ້ນທາງລົດໄຟລາວ-ຈີນ ຊ່ວງທີ່ຜ່ານແຂວງຫລວງນໍ້າທາ, ຕິດຕາມກວດກາໂຄງການພັດທະນາຕົວເມືອງອະນຸພາກພື້ນແມ່ນໍ້າຂອງ 2 ຕົວເມືອງ ແລະ ຕິດຕາມກວດກາບັນຫາຂໍ້ຂັດແຍ່ງເຜົ່າ ແລະ ສາສະໜາຢູ່ບັນດາເມືອງ, ຕິດຕາມກວດກາການແກ້ໄຂ ແລະ ການປ້ອງພະຍາດໂຄວິດ-19, ຕິດຕາມກວດກາການນຳສິ່ງຄົນຈີນກັບຄືນປະເທດ, ຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳອື່ນໆກ່ຽວກັບການເຊົ່າ, ສຳປະທານທີ່ດິນ, ລົງຊຸກຍູ້ຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ.

ພ້ອມນັ້ນ, ຍັງຕິດຕາມກວດກາຮ່ວມກັບບັນດາກຳມາທິການຂອງສະພາແຫ່ງຊາດ ທີ່ມາເຄື່ອນໄຫວຢູ່ໃນທ້ອງຖິ່ນ, ຕິດຕາມກວດກາຜ່ານຄຳຮ້ອງ, ຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນຂອງສະພາແຫ່ງຊາດ ເຊິ່ງຜ່ານການຕິດຕາມກວດກາຊຸກຍູ້ນັ້ນ ໄດ້ເຮັດໃຫ້ການເຄື່ອນໄຫວຂອງຂະແໜງການໃນທ້ອງຖິ່ນໄດ້ຮັບການປັບປຸງດີຂຶ້ນ, ມີສະຕິເຄົາລົບ ແລະ ປະຕິບັດລະບຽບກົດໝາຍດີຂຶ້ນກວ່າເກົ່າ.

ນອກຈາກຜົນງານທີ່ໄດ້ຈັດຕັ້ງຕາມ 3 ພາລະບົດບາດດັ່ງກ່າວແລ້ວ, ທ່ານ ຄຳຟອງ, ອິນມານີ ຍັງໃຫ້ຮູ້ຕື່ມວ່າ: **ການສ້າງຄວາມເຂັ້ມແຂງ** ກໍໄດ້ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງຂອງສະພາປະຊາຊົນແຂວງ, ພະນັກງານຊ່ວຍວຽກໃຫ້ເປັນລະບົບຄົບຊຸດ; ເຂົ້າຮ່ວມເຝິກອົບຮົມ, ສຳມະນາວຽກງານຕ່າງໆ ຢູ່ສູນກາງ ແລະ ທ້ອງຖິ່ນຈັດຂຶ້ນທັງໝົດ 47 ຄັ້ງ, ມີ 49 ເທື່ອຄົນ ຍິງ 15 ເທື່ອຄົນ; ພ້ອມກັນນີ້, ຍັງໄດ້ນຳເອົາເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝວິສາມັນເທື່ອ 3 ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ແລະ ກົດໝາຍຈຳນວນໜຶ່ງລົງໂຄສະນາເຜີຍແຜ່ໃຫ້ແກ່ພະນັກງານ, ທະຫານ, ຕຳຫລວດ ຕະຫລອດຮອດພໍ່ແມ່ປະຊາຊົນລາວບັນດາເຜົ່າຢູ່, ບັນດາເມືອງ, 2 ກອງບັນຊາການ ແລະ ສະຖາບັນການສຶກສາພາຍໃນແຂວງຫລວງນໍ້າທາ ໄດ້ທັງໝົດ 28 ຈຸດ ມີ 27 ບ້ານ ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 3.204 ຄົນ ຍິງ 938 ຄົນ.

**ການພົວພັນກັບອົງການອື່ນໆຂອງລັດ:** ສະພາປະຊາຊົນແຂວງຫລວງນໍ້າທາ ໄດ້ປະສານສົມທົບ ກັບຄະນະປະຈຳສະພາແຫ່ງຊາດ, ບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ປະສານສົມທົບກັບອົງການປົກຄອງແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດພາລະບົດບາດຂອງຕົນ ເປັນຕົ້ນແມ່ນການຕິດຕາມກວດກາການເຄື່ອນໄຫວວຽກງານຂອງອົງ



ການບໍລິຫານ, ຕຸລາການ ແລະ ການພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງຊາດ, ທ້ອງຖິ່ນ, ການແກ້ໄຂຄຳຮ້ອງທຸກຂອງພົນລະເມືອງ.

**ການເຄື່ອນໄຫວຕ່າງປະເທດ:** ໃນໄລຍະຜ່ານມາ, ຄະນະ ສສຊ ປະຈຳເຂດເລືອກຕັ້ງກໍຄືສະພາປະຊາຊົນແຂວງ ໄດ້ເຄື່ອນໄຫວວຽກງານຕ່າງປະເທດ ຮ່ວມກັບສະພາແຫ່ງຊາດ, ອົງການປົກຄອງແຂວງ ໄດ້ທັງໝົດ 4 ຄັ້ງ ເປັນຕົ້ນແມ່ນພົບປະແລກປ່ຽນ ແລະ ເຮັດວຽກຢູ່ປະເທດມົງໂກລີ, ພົບປະແລກປ່ຽນບົດຮຽນ ແລະ ຢ້ຽມຢາມເຮັດວຽກຢູ່ 4 ແຂວງພາກເໜືອຂອງ ສສ.ຫວຽດນາມ; ເຂົ້າຮ່ວມງານບຸນມະໂຫລານມິດຕະພາບລະຫວ່າງປະຊາຊົນລາວ-ຫວຽດນາມ ຄັ້ງທີ V ທີ່ ສສ.ຫວຽດນາມ; ເຂົ້າຮ່ວມກອງປະຊຸມປຶກສາຫາລືພິທີເຊັນບົດບັນທຶກຮ່ວມລະຫວ່າງສະພາປະຊາຊົນແຂວງຫລວງນໍ້າທາ ກັບຄະນະປະຈຳສະພາປະຊາຊົນແຂວງຢຸນນານ ສປຈີນ.

ໃນໂອກາດນີ້, ທ່ານ ຄຳຟອງ ອິນມານີ ຍັງແຈ້ງໃຫ້ຮູ້ວ່າ: ໃນໄລຍະການເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ຕິດຕາມກວດກາ ເຫັນວ່າຄຳສະເໜີຂອງພໍ່ແມ່ປະຊາຊົນສ່ວນໃຫຍ່ແມ່ນ ສະເໜີໃຫ້ມີການປັບປຸງ, ກໍ່ສ້າງພື້ນຖານໂຄງລ່າງ ເປັນຕົ້ນແມ່ນການກໍ່ສ້າງສ້ອມແປງຖະໜົນຫົນທາງລະຫວ່າງບ້ານຫາບ້ານ, ບ້ານຫາເມືອງ, ເມືອງຫາແຂວງ, ງົບປະມານໃນການກໍ່ສ້າງພື້ນຖານໂຄງລ່າງ, ການຊອກຫາອາຊີບຄົງທີ່ໃຫ້ພໍ່ແມ່ປະຊາຊົນ ເຊັ່ນ ການປູກຝັງ ແລະ ລ້ຽງສັດໃຫຍ່ ແລະ ການຈັດແບ່ງເຂດທຳການຜະລິດຂອງປະຊາຊົນ ດັ່ງນັ້ນ, ຈຶ່ງໄດ້ວາງມາດຕະການແກ້ໄຂໃນຕໍ່ໜ້າ ໂດຍການເອົາໃຈໃສ່ໃນການປະສານສົບທົບກັບອົງການປົກຄອງແຂວງ ແລະ ຊຸກຍູ້ພາກສ່ວນກ່ຽວຂ້ອງໃນການແກ້ໄຂບັນຫາດັ່ງກ່າວ ເພື່ອເຮັດການດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າພາຍໃນແຂວງໄດ້ຮັບການປັບປຸງດີຂຶ້ນເທື່ອລະກ້າວ.

ໃນຕອນທ້າຍ, ທ່ານຍັງໄດ້ຮຽກຮ້ອງໃຫ້ອົງການຈັດຕັ້ງພັກ-ລັດ ແລະ ພາກສ່ວນກ່ຽວຂ້ອງໃຫ້ເອົາໃຈໃສ່ໃນການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນຢ່າງເຂັ້ມງວດ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ ມີປະສິດທິພາບສູງຂຶ້ນ ໄດ້ຮັບຜົນສຳເລັດຕາມລະດັບຄາດໝາຍ.

# ສະພາປະຊາຊົນແຂວງຫົວພັນ ມອບຊີມັງໃຫ້ບ້ານອ່າງ




(ສພຊ) ຕອນບ່າຍວັນທີ 9 ທັນວາ 2022 ສະພາປະຊາຊົນແຂວງຫົວພັນ ໄດ້ນຳເອົາຊີມັງ ຈຳນວນ 1 ໂຕນ ລວມມູນຄ່າ 1.340.000 ກີບ ມອບໃຫ້ອຳນາດການປົກຄອງບ້ານນາອ່າງ ເມືອງຊຳເໜືອ ແຂວງຫົວພັນ ເພື່ອເປັນການປະກອບສ່ວນເຂົ້າໃນການກໍ່ສ້າງຂົວອູ່ຂ້າມນໍ້າຊຳ ເຊິ່ງຂົວດັ່ງກ່າວ ມີລວງກວ້າງ 1,5 ແມັດ ແລະ ລວງຍາວປະມານ 38 ແມັດ, ຕາງໜ້າກ່າວມອບໂດຍທ່ານ ຄຳຟອງ ກົ້ວມີໄຊ ກຳມະການຄະນະປະຈຳ, ເລຂາທິການສະພາປະຊາຊົນແຂວງຫົວພັນ ພ້ອມດ້ວຍຄະນະ ແລະ ກ່າວຮັບໂດຍແມ່ນທ່ານ ບຸນນົງ ພົມມະໂນໄນ ຮອງນາຍບ້ານດັ່ງກ່າວ ພ້ອມດ້ວຍຄະນະພັກ, ອົງການຈັດຕັ້ງບ້ານ.

ໂອກາດນີ້, ຮອງນາຍບ້ານນາອ່າງ ໄດ້ຕາງໜ້າໃຫ້ຄະນະພັກ, ອົງການຈັດຕັ້ງບ້ານ ແລະ ປະຊາຊົນບ້ານນາອ່າງ ໄດ້ສະແດງຄວາມຮູ້ບຸນຄຸນ, ຂອບໃຈຢ່າງສູງຕໍ່ສະພາປະຊາຊົນແຂວງຫົວພັນ ທີ່ນຳເອົາຊີມັງມາຊ່ວຍເຫລືອໃນການກໍ່ສ້າງຂົວໃນຄັ້ງນີ້ ແລະ ຈະນຳໃຊ້ວັດສະດຸດັ່ງກ່າວ ເຂົ້າໃນການກໍ່ສ້າງຂົວໃຫ້ເກີດຜົນປະໂຫຍດສູງສຸດ, ຖ້າຂົວອູ່ດັ່ງກ່າວກໍ່ສ້າງສຳເລັດ ຈະເຮັດໃຫ້ປະຊາຊົນເວົ້າລວມ ເວົ້າສະເພາະປະຊາຊົນພາຍໃນບ້ານມີຄວາມສະດວກຫລາຍຂຶ້ນ ໄປສູ່ເຂດທຳການຜະລິດຂອງປະຊາຊົນເພື່ອແກ້ໄຂຊີວິດການເປັນຢູ່ໃຫ້ນັບມື້ດີຂຶ້ນ ແລະ ຫວັງຢ່າງຍິ່ງວ່າຕໍ່ໜ້າຍັງຈະໄດ້ຮັບການຊ່ວຍເຫລືອຈາກຫລາຍໆ ພາກສ່ວນຕື່ມອີກ.

(ນັກຂ່າວ ສພຂ ຫົວພັນ)

# ສະພາປະຊາຊົນ 2 ແຂວງ ສ້າງຂະບວນການແຂ່ງຂັນກິລາເຕະບານມິດຕະພາບ



(ສພຊ) ໃນວັນທີ 9 ທັນວາ 2022 ທີ່ສະໜາມກິລາພູເບຍ ແຂວງຄຳມ່ວນ, ສະພາປະຊາຊົນແຂວງຄຳມ່ວນ ໄດ້ສ້າງກິດຈະກຳແຂ່ງຂັນກິລາເຕະບານມິດຕະພາບຮ່ວມກັບສະພາປະຊາຊົນແຂວງສະຫວັນນະເຂດ ໂດຍການເຂົ້າຮ່ວມຂອງທ່ານ ບົວພັນ ແສງຈັນ ຮອງປະທານສະພາປະຊາຊົນແຂວງຄຳມ່ວນ ແລະ ທ່ານ ບົວລົມ ອິດທິທະວົງ ຮອງເລຂາທິການສະພາປະຊາຊົນແຂວງສະຫວັນນະເຂດ ພ້ອມດ້ວຍຄະນະເລຂາທິການ, ຫົວໜ້າ-ຮອງຫົວໜ້າຂະແໜງ ຕະຫລອດຮອດພະນັກງານສະພາປະຊາຊົນແຂວງຂອງ 2 ແຂວງເຂົ້າຮ່ວມ.

ການສ້າງຂະບວນການຄັ້ງນີ້, ກໍເພື່ອສະເຫລີມສະຫລອງວັນສຳຄັນຂອງຊາດ ກໍຄືວັນຊາດທີ 2 ທັນວາ ຄົບຮອບ 47 ປີ (2 ທັນວາ 1975-2 ທັນວາ 2022) ແລະ ວັນຄ້າຍວັນເກີດປະທານ ໄກສອນ ພົມວິຫານ ຄົບຮອບ 102 ປີ (13 ທັນວາ 1920-13 ທັນວາ 2022), ໃຫ້ມີບັນຍາກາດທີ່ຟົດຟື້ນ ທັງເປັນການສ້າງຄວາມສາມັກຄີຮັກແພງໃນຖັນແຖວພະນັກງານລະຫວ່າງສະພາປະຊາຊົນແຂວງຄຳມ່ວນ ກັບສະພາປະຊາຊົນແຂວງສະຫວັນນະເຂດ ໃຫ້ໜັກແໜ້ນ, ເລິກເຊິ່ງກ້າວໄປເຖິງການພົວພັນປະສານງານ ແລະ ແລກປ່ຽນບັນດາວຽກງານໃນການຈັດຕັ້ງປະຕິບັດໜ້າທີ່ໃນການເປັນເສນາທິການທີ່ດີ.

ນອກນັ້ນ, ສະພາປະຊາຊົນແຂວງສະຫວັນນະເຂດ ຍັງໄດ້ສະໜັບສະໜູນຊຸດກິລາ 53 ຊຸດ ຕາງໜ້າມອບໂດຍທ່ານ ບົວລົມ ອິດທິທະວົງ ແລະ ຕາງໜ້າຮັບໂດຍທ່ານ ບົວພັນ ແສງຈັນ ເຊິ່ງມີພະນັກງານ-ລັດຖະກອນຂອງ 2 ຝ່າຍເຂົ້າຮ່ວມເປັນສັກຂີພິຍານ.

(ເອື້ອ ມະໂນສິງ)




# ຈັນຍາບັນ-ຈັນຍາທຳ

ໂດຍ: ຄົ້ນກົບເມກ




ຈັນຍາບັນ ຄືສິ່ງທີ່ຕ້ອງປະຕິບັດຕໍ່ຄົນອື່ນ ຫລື ສັງຄົມ ເພື່ອໃຫ້ເກີດຄວາມປອດໃສ-ຍຸຕິທຳ ແລະ ໜ້າເຄົາລົບ ຖ້າວ່າພະນັກງານຄົນໃດຫາກຂາດຈັນຍາບັນໃນອາຊີບໜ້າທີ່ ມັນອາດພາໃຫ້ເກີດຄວາມບໍ່ໄວ້ວາງໃຈ ແລະ ເສື່ອມສັດທາຕໍ່ການປະພຶດ. ດຳລັດເລກທີ 184/ລບ/2019 ວ່າດ້ວຍຈັນຍາບັນຂອງພະນັກງານ-ລັດຖະກອນ ມາດຕາ 2 ໄດ້ໃຫ້ນິຍາມແຈ້ງວ່າ: ຈັນຍາບັນຂອງພະນັກງານ-ລັດຖະກອນ ແມ່ນກິດການປະພຶດ ທີ່ພະນັກງານ-ລັດຖະກອນຕ້ອງເຄົາລົບ ແລະ ປະຕິບັດຢ່າງເຂັ້ມງວດ.

ສຳລັບມາດຕາ 5 ຂອງດຳລັດດັ່ງກ່າວໄດ້ກຳນົດໄວ້ວ່າ: ຈັນຍາບັນຂອງພະນັກງານ-ລັດຖະກອນປະກອບດ້ວຍ 4 ປະເພດຄື: ຈັນຍາບັນຕໍ່ຕົນເອງ; ຈັນຍາບັນຕໍ່ວິຊາຊີບ; ຈັນຍາບັນຕໍ່ການຈັດຕັ້ງ; ຈັນຍາບັນຕໍ່ປະຊາຊົນ ແລະ ສັງຄົມ

ຜູ້ຂຽນເຂົ້າໃຈວ່າ ດຳລັດນີ້ ລົງຢາກມຸ່ງສ້າງໃຫ້ພະນັກງານ-ລັດຖະກອນ ໄດ້ມີຄຸນສົມບັດເປັນພະນັກງານທີ່ດີ ເພິ່ນຈຶ່ງເນັ້ນຈັນຍາບັນຕື່ມໃນມາດຕາ 6 ວ່າດ້ວຍ ຈັນຍາບັນຕໍ່ຕົນເອງໃຫ້ກາຍເປັນພະນັກງານທີ່ດີ ຄື: ມີຄຸນທາດການເມືອງໜັກແໜ້ນ... ມີຄວາມບໍລິສຸດ ແລະ ນ້ຳໃຈເສຍສະລະຕໍ່ປະເທດຊາດ ແລະ ປະຊາຊົນ ມີຄຸນສົມບັດສິນທຳປະຕິວັດ, ຊື່ສັດບໍລິສຸດ ຕໍ່ການຈັດຕັ້ງ, ຕໍ່ຄອບຄົວ, ຕໍ່ເພື່ອນຮ່ວມງານ... ເຄົາລົບສິດເປັນເຈົ້າຂອງປະຊາຊົນ.

ຜູ້ຂຽນຂໍມີຄຳເຫັນວ່າ: ດຳລັດສະບັບນີ້ ໄດ້ບົ່ງແຈ້ງ ເຖິງກິດການປະພຶດທີ່ເປັນຈັນຍາບັນຂອງພະນັກງານ-ລັດຖະກອນ ເຊິ່ງອາດມີພຽງການເຜີຍແຜ່ຈັດຕັ້ງປະຕິບັດໃນຫ້ອງການ, ສຳນັກງານຍັງບໍ່ໄດ້ນຳມາສຶກສາອົບຮົມໃຫ້ພະນັກງານໄດ້ເຂົ້າໃຈແຈ້ງເຫັນໄດ້ວ່າ ມາດຕາ 11 ໄດ້ກຳນົດຕໍ່ຜູ້ລະເມີດດຳລັດນີ້ ຈະຖືກສຶກສາອົບຮົມກ່າວເຕືອນ, ລົງວິໄນຕາມກົດໝາຍວ່າດ້ວຍພະນັກງານລັດຖະກອນ ສະບັບເລກທີ 74 ແລະ ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫລື ລົງໂທດທາງອາຍາຕາມກໍລະນີໜັກ ຫລື ເບົາ.

ສັງລວມໄດ້ວ່າ: ກົນໄກການບໍລິຫານຂອງລັດເທົ່ານັ້ນ ຄຸ້ມຄອງສັງຄົມດ້ວຍກົດໝາຍນັ້ນ ແມ່ນລະບຽບມາດຕະການ ຂ້ອນຂ້າງຮອງຮັບໄວ້ສົມບູນຄົບຖ້ວນ ເຊິ່ງອາດຍັງພຽງແຕ່ການເປີດເຜີຍແຜ່ສຶກສາອົບຮົມໃຫ້ພະນັກງານ ໄດ້ຮັບຮູ້ໄດ້ເຂົ້າໃຈຕໍ່ພາລະບົດບາດຂອງຕົນເພື່ອບໍ່ໃຫ້ພະນັກງານຂາດຈັນຍາບັນ ໃນການປະກອບໜ້າທີ່ວຽກງານ.




# ພະທາດຫລວງ

\# ໂດຍ: ຫງວນ ກວາງ ທຽວ

ບົດກະວີຈາກນັກຂຽນ ສ.ສ ຫວຽດນາມເພື່ອສະເຫລີມສະຫລອງວັນສ້າງຕັ້ງສາຍພົວພັນທາງການທູດ ລາວ-ຫວຽດນາມ ຄົບຮອບ 60 ປີ ແລະ ວັນເຊັນສົນທິສັນຍາມິດຕະພາບ ລາວ-ຫວຽດນາມ ຄົບຮອບ 45 ປີ

❊ ທາດຫລວງງາມສະຫງ່າຕັ້ງ
ປຽບດັ່ງສອນປາຍແຫລມ
ປະດັບປະດາດ້ວຍ
ຊື່ວ່າ "ບົວ" ປ່ຽມລົ້ນ

ເຫລືອງໂອບສີຄຳ
ຫລິ່ນມາຈາກເມືອງຟ້າ
ກີບເກສອນດວງກອກ
ສັດທາໄຫວ້ກາບບູຊາ

❊ ເຫລືອງອາລ່າມໂອບອ້ອມ
ຄວາມສະຫງົບສາມັກຄີ
ຕັ້ງແຕ່ເໜືອເຖິງໃຕ້
ທົ່ວທານີເຂດແຄວ້ນ

ປະສິງສື່ເຖິງຄວາມສຸກ
ເຜົ່າປະຊາຊາວເຊື້ອ
ໃນແດນລາວຜືນແຜ່ນ
ສັດທາຫຸ້ມເທີດທູນ

❊ ມະຫາສະໝຸດຟາກຟ້າ
ຍັງເຫື້ອມໄສສັດທາ
ລາສີ ກັງວານກ້ອງ
ເໝືອນວ່າມີສິ່ງຊ້ອນ

ທະເລເລິກແສນໄກ
ພະທາດຫລວງລາວນີ້
ນອງນັນໄປທົ່ວ
ສັກສິດລີ້ເຊື່ອງໃນ

❊ ໃຜໄດ້ກົ້ມກາບໄຫວ້
ພະນິມມີເຖິງພອນ
ເໝືອນວ່າມີມົນໃຫ້
ແຖມຄວາມສຸກລາບລົ້ນ

ບັນຈິງສື່ສານຂໍ
ພະທາດຫລວງລາວນີ້
ບັນດານໃຈຈິດແຈ່ມ
ມີຂຶ້ນຕໍ່ມາ ແທ້ນາ!

❊ ມະນຸດໃນລຸ່ມຟ້າ
ເໝືອນວ່າມີມົນຂັງ
ທຽວທ່ອງໃນແດນພື້ນ
ຊື່ວ່າແດນ "ລ້ານຊ້າງ"

ສັດທາແຫ່ຢາມເຢືອນ
ຊັກຈູງບັນດານໃຫ້
ທຳລະນີຂານຊ່າ
ລາວນີ້ບໍ່ຂາດສາຍ ແທ້ແລ້ວ!

ແປໂດຍ: ອາຈານ ແສງຈັນ ສຸຂະເສມ

ຮຽບຮຽງເປັນກອນໂດຍ: ກົງໃຈ ແສງອຳພັນ



ສຸກສະບາຍຫາຍໂຣຄ

# ຄຸນປະໂຫຍດຂອງໝາກໝັ້ນ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ

**1. ຊ່ວຍຍ່ອຍອາຫານ**

ໝາກໝັ້ນ ມີສານຊໍບິດທໍ (sorbitol) ແລະ ອີຊາຕິນ (isatin) ທີ່ຊ່ວຍຄວບຄຸມລະບົບຍ່ອຍອາຫານ ມີສັບພະຄຸນເປັນຢາລະບາຍ ແລະ ກະຕຸ້ນການປ່ອຍຂອງແຫລວໃນລຳໄສ້ ແລະ ຊ່ວຍໃຫ້ເກີດການເຜົາຜານສິ່ງເສດເຫລືອໄດ້ຢ່າງມີປະສິດທິພາບ.

**2. ບຳລຸງຕາ**

ໝາກໝັ້ນ ມີວິຕາມິນຊີ ແລະ ເບຕ້າແຄໂຣທີນທີ່ມີປະໂຫຍດຊ່ວຍໃນການບຳລຸງຕາ ແລະ ປ້ອງກັນການເສື່ອມສະມັດຕະພາບຂອງຕາເມື່ອອາຍຸຫລາຍຂຶ້ນ; ປ້ອງກັນໂລກຕໍ້ກະຈົກໄດ້ ເພາະໃນໝາກໝັ້ນປະກອບດ້ວຍ ແຄໂລທີນອຍ (carotenoids), ລູທີນ (lutein) ແລະ ຊີແຊນທີນ (zeaxanthin) ທີ່ຊ່ວຍປ້ອງກັນຕາຈາກລັງສີອາວຕາໄວໂອເລດທີ່ເປັນອັນຕະລາຍ.

**3. ດີຕໍ່ຫົວໃຈ**

ການກິນໝາກໝັ້ນແຫ້ງເປັນປົກກະຕິ ຈະຊ່ວຍກ່ຽວກັບການໄຫລວຽນຂອງເລືອດໃນຫລອດເລືອດແດງພ້ອມນັ້ນ, ຍັງປ້ອງກັນພາວະຫົວໃຈຢຸດເຕັ້ນ, ໂລກຫລອດເລືອດໃນສະໝອງ (ແຕກ, ຕີບ, ຕັນ) ແລະ ໂລກຫົວໃຈອື່ນໆ.

**4. ສ້າງພູມຄຸ້ມກັນ**

ວິຕາມິນຊີ ທີ່ມີຢູ່ໃນໝາກໝັ້ນ ຊ່ວຍສ້າງພູມຄຸ້ມກັນ ເພາະວິຕາມິນຊີ ມີໜ້າທີ່ສຳຄັນໃນການສ້າງໃຫ້ຮ່າງກາຍແຂງແຮງ ແລະ ທົນທານຕໍ່ການຕິດເຊື້ອ ແລະ ອັກເສບໄດ້.

**5. ຊ່ວຍໃນການໄຫລວຽນຂອງເລືອດ**

ໝາກໝັ້ນ ມີວິຕາມິນ ແລະ ໂພແທັດຊຽມ ທີ່ຊ່ວຍດູດຊຶມທາດເຫລັກໃນຮ່າງກາຍ ນອກນັ້ນ, ຍັງມີທາດເຫລັກ ແລະ ທອງແດງຈຳນວນຫລາຍ ທີ່ຊ່ວຍສ້າງເຊວເມັດເລືອດແດງ ຈຶ່ງຊ່ວຍໃຫ້ເລືອດ ແລະ ການໄຫລວຽນເລືອດດີຂຶ້ນ.

**6. ອຸດົມໄປດ້ວຍສານຕ້ານອະນຸມູນອິດສະຫລະ**

ໝາກໝັ້ນ ມີສານຕ້ານອະນຸມູນອິດສະຫລະຈຳນວນຫລາຍ ທີ່ຊ່ວຍຫລຸດຄວາມເສຍຫາຍທີ່ເກີດຈາກອະນຸມູນອິດສະຫລະໃນຮ່າງກາຍ ດັ່ງນັ້ນ, ຖ້າທ່ານໃດທີ່ກຳລັງຊອກຫາໝາກໄມ້ທີ່ມີສ່ວນຊ່ວຍໃນການຕໍ່ຕ້ານອະນຸມູນອິດສະຫລະ ໝາກໝັ້ນກໍເປັນຕົວເລືອກທີ່ດີເຊັ່ນດຽວກັນ.

**7. ເປັນມິດກັບຜິວ**

ວິຕາມິນຊີ ແລະ ສານຕໍ່ຕ້ານອະນຸມູນອິດສະຫລະຕ່າງໆ ທີ່ມີຢູ່ໃນໝາກໝັ້ນ ຈະຊ່ວຍໃຫ້ຜິວກະຈ່າງໃສ, ອ່ອນເຍົາ ແລະ ສົດໃສຍິ່ງຂຶ້ນ ຖ້າເຮົາກິນໝາກໄມ້ທີ່ມີວິຕາມິນຊີຫລາຍ ຈະເຮັດໃຫ້ຮອຍຫ່ຽວຫລຸດລົງ ແລະ ເຮັດໃຫ້ຜິວກັບມາຊຸ່ມຊື່ນຫລາຍກວ່າເກົ່າ.



## 11 ເດືອນ...

ພັກແຕ່ລະຂັ້ນຕໍ່ການແກ້ໄຂບັນຫາຢາເສບຕິດ, ມະຕິ 04/ສພຊ ຂອງສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ (2021-2023); ລັດຖະບານ ໂດຍແມ່ນກະຊວງປ້ອງກັນຄວາມສະຫງົບ ກໍໄດ້ເປັນໃຈກາງໃນການນໍາພາເຄື່ອນໄຫວຈັດຕັ້ງປະຕິບັດວາລະແຫ່ງຊາດໄປ ຕາມ 6 ວຽກຈຸດສຸມ ເຊິ່ງສາມາດຍາດໄດ້ຜົນສໍາເລັດຫລາຍດ້ານສະແດງອອກ ດັ່ງນີ້:

1. ດ້ານວຽກງານສ້າງຄວາມຮັບຮູ້ໃນທົ່ວສັງຄົມດ້ວຍການສຶກສາອົບຮົມ, ໂຄສະນາເຜີຍແຜ່ລະບຽບກົດໝາຍ ແລະ ຜົນຮ້າຍຂອງຢາເສບຕິດ.

- ໄດ້ຈັດກອງປະຊຸມສະຫລຸບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໄລຍະທີ I ແລະ ທິດທາງແຜນການ ໄລຍະທີ II ຢູ່ບັນດາແຂວງໃນທົ່ວປະເທດ;

- ບັນດາແຂວງໃນທົ່ວປະເທດ ໄດ້ລົງເຜີຍແຜ່ບັນດາເອກະສານກ່ຽວກັບວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຢູ່ຂັ້ນເມືອງ, ຂັ້ນກຸ່ມບ້ານ, ຂັ້ນບ້ານ;

- ບັນດາກະຊວງ ແລະ ອົງການທຽບເທົ່າກະຊວງ ໄດ້ຈັດຕັ້ງເຊື່ອມຊຶມບັນດາເອກະສານກ່ຽວກັບວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຢູ່ບັນດາກົມກອງອ້ອມຂ້າງກະຊວງ ແລະ ຢູ່ທ້ອງຖິ່ນຕາມສາຍຕັ້ງຂອງຕົນ;

- ກະຊວງປ້ອງກັນຄວາມສະຫງົບ ໄດ້ສົມທົບກັບພາກສ່ວນກ່ຽວຂ້ອງ ລົງໂຄສະນາເຜີຍແຜ່ລະບຽບກົດໝາຍ ແລະ ຜົນຮ້າຍຈາກຢາເສບຕິດ ຢູ່ບັນດາສະຖາບັນການສຶກສາ, ສໍານັກງານອົງການລວມ 24 ຄັ້ງ, ມີຜູ້ເຂົ້າຮ່ວມຮັບຟັງທັງໝົດ 4.559 ຄົນ/ຍິງ 1.971 ຄົນ;

- ໄດ້ຕິດຕັ້ງປ້າຍຄໍາຂວັນສໍາເລັດ ຈໍານວນ 175 ປ້າຍ, ປ້າຍຂະໜາດໃຫຍ່ 49 ປ້າຍ ຢູ່ຕາມຈຸດທີ່ກະຊວງ-ອົງການ ແລະ ແຂວງໄດ້ກໍານົດສະເພາະ;

- ໄດ້ຈັດພິມໂປສເຕີ 850 ແຜ່ນ, ແຜ່ນພັບ 1.800 ແຜ່ນ, ແຜ່ນ DVD 300 ແຜນ ເພື່ອນໍາໃຊ້ເຂົ້າໃນວຽກງານໂຄສະນາຕ້ານຢາເສບຕິດ;

- ໄດ້ອອກໂຄສະນາສັ້ນເລື່ອງ, ລະຄອນສັ້ນ 1 ເລື່ອງ, ບົດເພງ 5 ບົດ ຜ່ານທາງວິທະຍຸ, ໂທລະພາບ, ໜັງສືພິມ ຂອງກໍາລັງປ້ອງກັນຄວາມສະຫງົບ;

- ໄດ້ຈັດກິດຈະກໍາຍ່າງມີນິມາລາທອນເນື່ອງໃນວັນສາກົນຕ້ານຢາເສບຕິດ (ວັນທີ 26 ມິຖຸນາ) ຄົບຮອບ 35 ປີ ໂດຍການເຂົ້າຮ່ວມຂອງປະທານສະພາແຫ່ງຊາດ, ການນໍາພັກ-ລັດ ແລະ ພໍ່ແມ່ປະຊາຊົນຊາວນະຄອນຫລວງວຽງຈັນ ໃນວັນທີ 25 ມິຖຸນາ ທີ່ປະຕູໄຊ, ນະຄອນຫລວງວຽງຈັນ, ມີມວນຊົນເຂົ້າຮ່ວມ1.000ກວ່າຄົນ;

- ໄດ້ຈັດພິທີຈູດທໍາລາຍຢາເສບຕິດທີ່ສານໄດ້ຕັດສິນໃຊ້ໄດ້ຢ່າງເດັດຂາດແລ້ວ ໃນທົ່ວປະເທດ ແລະ ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ໄດ້ອ່ານສານຜ່ານສື່ມວນຊົນເນື່ອງໃນວັນແຫ່ງຊາດຕ້ານຢາເສບຕິດ (ວັນທີ 12 ຕຸລາ) ຄົບຮອບ 21 ປີ.

2. ດ້ານວຽກງານສ້າງ, ປັບປຸງກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍທີ່ກ່ຽວຂ້ອງກັບບັນຫາຢາເສບຕິດ

- ໄດ້ເຜີຍແຜ່ກົດໝາຍວ່າດ້ວຍຢາເສບຕິດສະບັບປັບປຸງ ໃຫ້ແກ່ບັນດາກະຊວງ, ອົງການຈັດຕັ້ງ ແລະ ພາກສ່ວນກ່ຽວຂ້ອງ ໄດ້ຈໍານວນໜຶ່ງ;

- ໄດ້ປັບປຸງຄໍາສັ່ງ ເລກທີ 07/ນຍ ເປັນດໍາລັດວ່າດ້ວຍຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮັບເປັນຂອງລັດ ສະບັບເລກທີ 280/ລບ, ລົງວັນທີ 09 ສິງຫາ 2022;

- ໄດ້ຮ່າງດໍາລັດວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ສະບັບປັບປຸງ ປະຈຸບັນຍັງຢູ່ໃນຂັ້ນຕອນລໍຖ້າຜ່ານກອງປະຊຸມລັດຖະບານ;

- ໄດ້ຄົ້ນຄວ້າປັບປຸງນິຕິກໍາໃຕ້ກົດໝາຍທີ່ກ່ຽວຂ້ອງກັບຢາເສບຕິດ ມີທັງໝົດ 11 ນິຕິກໍາ ເຊັ່ນ: ດໍາລັດວ່າດ້ວຍວຽກງານຄຸມຂັງ-ດັດສ້າງ, ຄໍາແນະນໍາຮ່ວມຂອງສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ກະຊວງປ້ອງກັນຄວາມສະຫງົບ ກ່ຽວກັບວິທີການຈັດຕັ້ງປະຕິບັດໂທດປະຫານຊີວິດ, ຄໍາແນະນໍາຂອງຄະນະປະຈໍາສະພາແຫ່ງຊາດ ກ່ຽວກັບວິທີປະຕິບັດຄໍາຕັດສິນປະຫານຊີວິດ ແລະ ອື່ນໆ.

3. ດ້ານວຽກງານປັບປຸງກົງຈັກການຈັດຕັ້ງ ແລະ ຍົກລະດັບຄວາມສາມາດໃນການເຄື່ອນໄຫວເຮັດໜ້າທີ່ການເມືອງຂອງອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ອົງການສານປະຊາຊົນ, ອົງການປະຕິບັດຄໍາຕັດສິນຂອງສານ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕໍ່ການແກ້ໄຂບັນຫາຢາເສບຕິດ.

- ໄດ້ປັບປຸງກົງຈັກການຈັດຕັ້ງໃນກໍາລັງປ້ອງກັນຄວາມສະຫງົບເປັນຕົ້ນແມ່ນຢູ່ຂົງເຂດການສືບສວນ-ສອບສວນ, ສືບຂ່າວ ທີ່ຂຶ້ນກັບກົມໃຫຍ່ຕໍາຫລວດ, ຫ້ອງຕໍາຫລວດ, ກອງບັນຊາການປ້ອງກັນຄວາມສະຫງົບແຂວງ-ນະຄອນຫລວງ;

- ເພື່ອເຮັດໃຫ້ການດໍາເນີນຄະດີໄປຕາມຂະບວນການຍຸຕິທໍາກະຊວງປ້ອງກັນຄວາມສະຫງົບ, ອົງການໄອຍະການປະຊາຊົນສູງສຸດ, ອົງການສານປະຊາຊົນສູງສຸດ ແລະ ກະຊວງຍຸຕິທໍາ ໄດ້ມີການຈັດກອງປະຊຸມແລກປ່ຽນຄວາມຄິດເຫັນການດໍາເນີນຄະດີຕາມຂະບວນຍຸຕິທໍາ ລະດັບລັດຖະມົນຕີ-ຫົວໜ້າອົງການ, ນອກນັ້ນ, ກໍໄດ້ຈັດກອງປະຊຸມລະດັບວິຊາການຫລາຍຄັ້ງ ເພື່ອກໍານົດກົນໄກການປະສານງານ ແລະ ຖອດຖອນບົດຮຽນ.

4. ດ້ານວຽກງານຍົກສູງປະສິດທິພາບດ້ານການຄຸ້ມຄອງ, ຊີ້ນໍາໃນການຈັດຕັ້ງປະຕິບັດຮອບດ້ານວຽກງານແກ້ໄຂບັນຫາຢາເສບຕິດ.

- ໃນໄລຍະເດືອນມັງກອນ-ພະຈິກ 2022 ໃນຂອບເຂດທົ່ວປະເທດ ສາມາດແກ້ໄຂມ້າງລາຍຄະດີຢາເສບຕິດໄດ້ທັງໝົດ 4.707 ຄະດີ, ຈັບຜູ້ຖືກຫາໄດ້ 6.873 ຄົນ/ຍິງ 795 ຄົນ, ຄົນຕ່າງປະເທດ 135 ຄົນ/ຍິງ 11 ຄົນ (ຫວຽດນາມ 12/03 ຄົນ, ຈີນ 33/02 ຄົນ, ມຽນມາ 31/02 ຄົນ, ໄທ 24/02 ຄົນ, ກໍາປູເຈຍ 1 ຄົນ, ມາເລເຊຍ 01 ຄົນ, ຟີລິບປິນ 01/01 ອິນໂດເນເຊຍ 01/01 ຄົນ



ແລະ ໄນຈີເລຍ 01 ຄົນ), ຍຶດຢາບ້າໄດ້ 139.587.060 ເມັດ (ໜຶ່ງຮ້ອຍສາມສິບເກົ້າລ້ານຫ້າແສນແປດສິບເຈັດພັນຫົກສິບເມັດ) ຢາບ້າເປັນຝຸ່ນ 7,52 ກິໂລກຣາມ ນໍ້າໜັກລວມ 13.966,22 ກິໂລຣາມ, ຢາໄອສ໌ 2,199,9 ກິໂລກຣາມ, ເຮໂຣອິນ 175,77 ກິໂລກຣາມ, ຄັນຊາ 10.284,27 ກິໂລກຣາມ, ຢາຝິ່ນ 250,36 ກິໂລກຣາມ, ຢາອີ 2.605 ເມັດ (ສອງພັນຫົກຮ້ອຍຫ້າເມັດ), ໂຄເຄນ 3 ກິໂລກຣາມ, ແປ້ງຝຸ່ນປະສົມຢາເສບຕິດ 11.576,76 ກິໂລກຣາມ, ເຄຕາມີນ 1.930,28 ກິໂລກຣາມ, ຄາເຟອີນ 168 ກຣາມ, ຢາສານເຄມີ 849 ກຣາມ ແລະ ນໍ້າກົດ 9.400 ລິດ, ຍຶດລົດໃຫຍ່ໄດ້ 162 ຄັນ, ລົດຈັກ 734 ຄັນ, ເຮືອ 1 ລໍາ;

- ໄດ້ລົງສໍາຫລວດເນື້ອທີ່ລັກລອບປູກຝິ່ນ ປະຈໍາສົກປີ 2021-2022 ຢູ່ 8 ແຂວງພາກເໜືອ ກວດພົບເຫັນສວນຝິ່ນ 2.000 ກວ່າຕອນ ແລະ ໄດ້ລົງທໍາລາຍຖິ້ມ ຈໍານວນ 617 ເຮັກຕາ;

- ໄດ້ສັງລວມສະຖິຕິຜູ້ຕິດຢາເສບຕິດເຂົ້າປິ່ນປົວຢູ່ສູນບໍາບັດປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ 13 ແຫ່ງ, ມີທັງໝົດ 5.922/201 ຄົນ, ໃນນັ້ນມີຜູ້ທີ່ປິ່ນປົວດີແລ້ວກັບຄືນບ້ານມີທັງໝົດ 2.928/97 ຄົນ, ສືບຕໍ່ປິ່ນປົວ 2.994/104 ຄົນ;

- ໄດ້ມອບຢາປິ່ນປົວພະຍາດໃຫ້ແກ່ໜ່ວຍງານປິ່ນປົວ ແລະ ໃຫ້ຄໍາປຶກສາຜູ້ຕິດຢາເສບຕິດ ຂັ້ນຊຸມຊົນ ມີທັງໝົດ 28 ແຫ່ງ ຢູ່ 6 ແຂວງຄື: ແຂວງ ໄຊຍະບູລີ, ວຽງຈັນ, ບໍລິຄໍາໄຊ, ຄໍາມ່ວນ, ສະຫວັນນະເຂດ ແລະ ນະຄອນຫລວງວຽງຈັນ ມີຜູ້ເຂົ້າມາປິ່ນປົວ 424/8 ຄົນ, ຮັບຄໍາປຶກສາ ແລະ ຕໍ່ຢາ 1,360 ຄັ້ງ;

- ໄດ້ລົງປະເມີນກຸ່ມຜູ້ໃຊ້ຢາເສບຕິດສັກເຂົ້າທາງເສັ້ນເລືອດຢູ່ 6 ແຂວງຄື: ແຂວງອຸດົມໄຊ, ບໍ່ແກ້ວ, ຫົວພັນ, ບໍລິຄໍາໄຊ, ສະຫວັນນະເຂດ ແລະ ນະຄອນຫລວງວຽງຈັນ;

- ໄດ້ລົງເຮັດການສໍາຫລວດປັດໃຈສ່ຽງການນໍາໃຊ້ສິ່ງເສບຕິດຢູ່ 6 ແຂວງຄື: ແຂວງຫົວພັນ, ອຸດົມໄຊ, ນະຄອນຫລວງວຽງຈັນ, ຄໍາມ່ວນ, ເຊກອງ ແລະ ສະຫວັນນະເຂດ;

- ໄດ້ອອກໃບຢັ້ງຢືນຮັບຮອງບໍລິສັດເຂົ້າຮ່ວມໂຄງການປູກພືດທົດແທນການປູກຝິ່ນ ຢູ່ 7 ແຂວງ ມີທັງໝົດ 51 ບໍລິສັດ;

- ໄດ້ສົ່ງອອກກາເຟ ຂອງໂຄງການປູກພືດທົດແທນການປູກຝິ່ນ (LAOZ49) ແຂວງຫົວພັນ ໃຫ້ແກ່ບໍລິສັດມາລອງໂກ ປະເທດຝຣັ່ງ ຈໍານວນ 38.880 ກິໂລກຣາມ, ມູນຄ່າ 214.334,96 ໂດລາ ແລະ ໄດ້ຂາຍຢູ່ພາຍໃນປະເທດ ຈໍານວນ 23.650 ໂຕນ, ມູນຄ່າ 912.130.000 ກີບ;

- ໄດ້ຮັບການຊ່ວຍເຫລືອລ້າຢາປິ່ນປົວຜູ້ຕິດຢາເສບຕິດ ກາດອກບົວ ຫລື ຢາບົ່ງແຊນ ຈາກ ສສ.ຫວຽດນາມ ຈໍານວນ 1.000 ຊຸດ;

- ໄດ້ຮັບການຊ່ວຍເຫລືອລ້າເຄື່ອງກວດນໍ້າປັດສະວະຫາສານເສບຕິດ ຈໍານວນ 30.000 ຊຸດ ຈາກສໍານັກງານປ້ອງກັນ ແລະ ປາບປາມຢາເສບຕິດ ແຫ່ງ ຣາຊະອານາຈັກໄທ;

- ໄດ້ຮັບການຊ່ວຍເຫລືອລ້າລົດໂຮງໝໍ ຈໍານວນ 2 ຄັນ ເພື່ອມອບໃຫ້ສູນບໍາບັດປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ, ສູນສົມສະຫງ່າ, ນະຄອນຫລວງວຽງຈັນ ແລະ ສູນປິ່ນປົວຜູ້ຕິດຢາເສບຕິດ ແຂວງສະຫວັນນະເຂດ ຈາກ ສ.ເກົາຫລີ;

5. ດ້ານວຽກງານປັບປຸງຂີດຄວາມສາມາດການເຄື່ອນໄຫວເຮັດໜ້າທີ່ຂອງລະບົບການເມືອງແຕ່ລະຂັ້ນ ເພື່ອຊີ້ນໍາ-ນໍາພາແກ້ໄຂບັນຫາຢາເສບຕິດທີ່ເກີດຂຶ້ນຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

- ຄະນະພັກ-ອົງການປົກຄອງນະຄອນຫລວງວຽງຈັນ ແລະ ແຂວງໃນທົ່ວປະເທດ ໄດ້ຊີ້ນໍາ ແລະ ຈັດຕັ້ງຂະບວນການແຂ່ງຂັນສ້າງໂຮງຮຽນປອດຢາເສບຕິດ, ບ້ານປ້ອງກັນຄວາມສະຫງົບດີ, ບ້ານປອດຢາເສບຕິດ, ບ້ານປອດຄະດີ;

- ໄດ້ເປີດນໍາໃຊ້ອາຄານຈຸດກວດກາຢາເສບຕິດເພີ່ມຕື່ມທີ່ ບ້ານສາມັກຄີໄຊ, ເມືອງທ່າພະບາດ, ແຂວງບໍລິຄໍາໄຊ, ມາຮອດປະຈຸບັນໄດ້ມີຫ້ອງການ ຫລື ຈຸດກວດກາອັດປ່ອງຂ້າມລອຍຢາເສບຕິດທັງໝົດ 5 ຈຸດ ໃນນີ້ຢູ່ແຂວງບໍ່ແກ້ວ 2 ຈຸດ, ແຂວງຫລວງນໍ້າທາ, ອຸດົມໄຊ ແລະ ບໍລິຄໍາໄຊ ແຂວງລະ 1 ຈຸດ ແລະ ແຕ່ລະຈຸດໄດ້ນໍາໃຊ້ໝາວິຊາສະເພາະ ແລະ ເຄື່ອງເຕັກນິກຈໍານວນໜຶ່ງເຂົ້າໃນການກວດກາ.

6. ດ້ານວຽກງານເພີ່ມທະວີການຮ່ວມມືສາກົນ.

- ໄດ້ເປັນເຈົ້າພາບຈັດກອງປະຊຸມສອງຝ່າຍ ລາວ-ໄທ ລະດັບລັດຖະມົນຕີ ວ່າດ້ວຍການຮ່ວມມືເພື່ອຄວບຄຸມຢາເສບຕິດ ຄັ້ງທີ 18 ທີ່ນະຄອນຫລວງວຽງຈັນ, ສປປລາວ;

- ໄດ້ເຂົ້າຮ່ວມກອງປະຊຸມເຈົ້າໜ້າທີ່ອາວຸໂສອາຊຽນ ວ່າດ້ວຍບັນຫາຢາເສບຕິດ ຄັ້ງທີ 43 ແລະ ກອງປະຊຸມອື່ນໆທີ່ກ່ຽວຂ້ອງ ທີ່ກົວລາລໍາເປີ ປະເທດມາເລເຊຍ 1 ຄັ້ງ;

- ໄດ້ເຂົ້າຮ່ວມກອງປະຊຸມກ່ຽວກັບຄວາມໝັ້ນຄົງຂອງປະຊາຄົມອາຊຽນ ທີ່ສູນປະສານງານແມ່ນໍ້າຂອງປອດໄພ ນະຄອນຫລວງວຽງຈັນ 1 ຄັ້ງ

- ໄດ້ເຂົ້າຮ່ວມກອງປະຊຸມຫົວໜ້າອົງການບັງຄັບໃຊ້ກົດໝາຍຕ້ານຢາເສບຕິດ ຂອງພາກພື້ນອາຊີ ແລະ ປາຊີຟິກ ຄັ້ງທີ 44 ທີ່ ບາງກອກ ປະເທດໄທ 1 ຄັ້ງ

- ໄດ້ເຂົ້າຮ່ວມກອງປະຊຸມຄະນະປະຕິບັດງານ 1511 ໂຄງການແມ່ນໍ້າຂອງປອດໄພ ລະຫວ່າງ 3 ປະເທດ ລາວ-ໄທ-ມຽນມາ ທີ່ສູນປະສານງານແມ່ນໍ້າຂອງປອດໄພ, ນະຄອນຫລວງວຽງຈັນ 1 ຄັ້ງ

- ໄດ້ເຂົ້າຮ່ວມກອງປະຊຸມໜ່ວຍງານປະຈໍາພື້ນທີ່ ເພື່ອແກ້ໄຂບັນຫາຢາເສບຕິດຕາມຊາຍແດນ ລາວ-ໄທ ລະຫວ່າງ ແຂວງ ໄຊຍະບູລີ ກັບ 5 ແຂວງພາກເໜືອຂອງໄທ ທີ່ແຂວງໄຊຍະບູລີ 1 ຄັ້ງ

- ໄດ້ເຂົ້າຮ່ວມກອງປະຊຸມຜູ້ປະສານງານ ຂອງ ບັນດາປະເທດພາຄີບົດບັນທຶກຄວາມເຂົ້າໃຈວ່າດ້ວຍການຮ່ວມມືເພື່ອຄວບຄຸມຢາເສບຕິດໃນອະນຸພາກພື້ນແມ່ນໍ້າຂອງ ປີ 1993 ທີ່ສູນປະສານງານແມ່ນໍ້າຂອງປອດໄພ, ນະຄອນຫລວງວຽງຈັນ 1 ຄັ້ງ

- ໄດ້ເຂົ້າຮ່ວມກອງປະຊຸມການດໍາເນີນງານຂອງເຄືອຂ່າຍການຕິດຕາມຢາເສບຕິດອາຊຽນ ADMN ຄັ້ງທີ 12 ທີ່ ສູນປະສານງານແມ່ນນໍ້າຂອງປອດໄພ ນະຄອນຫລວງວຽງຈັນ 1 ຄັ້ງ;

- ໄດ້ເຂົ້າຮ່ວມການກວດກາລາດຕະເວນຮ່ວມທາງນໍ້າ ຄັ້ງປະຖົມມະລຶກຂອງໜ່ວຍປະສານງານປະຈານປະຈໍາພື້ນທີ່ຊາຍແດນພາກເໜືອ ລາວ-ໄທ ລະຫວ່າງ ແຂວງບໍ່ແກ້ວ ສປປລາວ ກັບ ແຂວງຊຽງລາຍ ຣາຊະອານາຈັກໄທ 1 ຄັ້ງ;

- ໄດ້ເປີດຫ້ອງການປະສານງານຄວບຄຸມຢາເສບຕິດຕາມຊາຍແດນ (BLO) ທີ່ໄດ້ຮັບການສະໜັບໜູນຈາກອົງການສະຫະປະຊາຊາດເພື່ອຄວບຄຸມຢາເສບຕິດ ແລະ ຕ້ານອາຊະຍາກໍາ (UNODC) ເພີ່ມອີກ 1 ແຫ່ງ ຄື: ດ່ານຂົວມິດຕະພາບລາວ-ໄທ ແຫ່ງທີ 3 ແຂວງຄໍາມ່ວນ;

- ໄດ້ເຂົ້າຮ່ວມການເຝິກອົບຮົມຫລັກສູດສໍາລັບຜູ້ບັນຊາການໃນວຽກງານປາບປາມຢາເສບຕິດ 1 ຄັ້ງ.

ສໍາລັບທິດທາງແຜນການໃນການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ໃນປີ 2023: ປຸກລະດົມ, ຂົນຂວາຍທຸກກໍາລັງແຮງສັງລວມ ເຂົ້າໃນການແກ້ໄຂບັນຫາຢາເສບຕິດ ທີ່ລະບາດເປັນວົງກວ້າງ ແລະ ຮຸນແຮງ ໃຫ້ຫລຸດລົງຢ່າງຈະແຈ້ງ ໃນກໍານົດເວລາທີ່ແນ່ນອນ, ເພື່ອແກ້ໄຂສາເຫດ ແລະ ເງື່ອນໄຂທີ່ພາໃຫ້ເກີດບັນຫາຢາເສບຕິດ; ສ້າງໃຫ້ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ-ຄວາມປອດໄພ, ສ້າງເງື່ອນໄຂໃນການສ້າງສາພັດທະນາເສດຖະກິດ, ວັດທະນະທໍາ-ສັງຄົມ, ກ້າວໄປສູ່ສັງຄົມລາວປອດຢາເສບຕິດໃຫ້ໄດ້ໃນທີ່ສຸດ; ພ້ອມນັ້ນ, ກໍເພີ່ມທະວີການໂຄສະນາ-ສຶກສາອົບຮົມ, ເຜີຍແຜ່ລະບຽບກົດໝາຍ ແລະ ຜົນຮ້າຍຈາກຢາເສບຕິດດ້ວຍຫລາຍຮູບຫລາຍສີຫລາຍວິທີການ ຢ່າງກວ້າງຂວາງ ແລະ ທຸກທົ່ວແຂວງ, ທຸກເມືອງ ກວມເອົາ 80% ຂຶ້ນໄປ ຂອງຈໍານວນບ້ານເປົ້າໝາຍທັງໝົດຢູ່ແຕ່ລະເມືອງ ແລະ ສ້າງບ້ານ, ສະຖາບັນການສຶກສາທຸກຊັ້ນ, ທຸກສາຍທັງພາກລັດ ແລະ ເອກະຊົນ, ສໍານັກງານ-ອົງການປອດຢາເສບຕິດໃຫ້ໄດ້ຫລາຍຂຶ້ນ ແລະ ສ້າງຫລັກສູດການຮຽນ-ການສອນກ່ຽວກັບການປ້ອງກັນ, ສະກັດກັ້ນບັນຫາຢາເສບຕິດ; ຍົກສູງປະສິດທິພາບ ອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ອົງການສານປະຊາຊົນ, ອົງການປະຕິບັດຄໍາຕັດສິນຂອງສານ ແລະ ວຽກງານວິຊາສະເພາະກວດກາ, ຄວບຄຸມ, ສະກັດກັ້ນ ແລະ ແກ້ໄຂບັນຫາຢາເສບຕິດ ຢ່າງເປັນລະບົບ ແລະ ເຂັ້ມແຂງ; ຂຶ້ນສະຖິຕິຜູ້ຕິດຢາເສບຕິດຢູ່ໃນສັງຄົມ ໃຫ້ມີຄວາມຊັດເຈນ ແລະ ສຸມໃສ່ບໍາບັດປິ່ນປົວຢູ່ສູນ, ຢູ່ຊຸມຊົນ, ປັບປຸງບັນດາສູນບໍາບັດປິ່ນປົວຜູ້ຕິດຢາເສບຕິດຢູ່ບັນດາແຂວງ ໃຫ້ມີປະສິດທິຜົນ, ມີການເຝິກວິຊາຊີບ ແລະ ແກ້ໄຂຊີວິດການເປັນຢູ່ໃຫ້ດີຂຶ້ນ; ເສີມຂະຫຍາຍວຽກງານຮ່ວມມືສາກົນໃນໂຄງການພັດທະນາທາງເລືອກທົດແທນການປູກຝິ່ນ-ປູກຄັນຊາ, ການຄວບຄຸມສານເຄມີຕົ້ນ ແລະ ການຄຸ້ມຄອງສູນວິໄຈຢາເສບຕິດ ໃຫ້ມີປະສິດທິພາບ.

## ຄະນະ...

(ສພຊ) ໃນວັນທີ 7 ທັນວາ 2022, ຄະນະສັນຕິພາບ ແລະ ສາມັກຄີ ຂອງລາວ ແລະ ກອງທຶນສາທາລະນະສາກົນ (ກອງທຶນຣັດເຊຍ ເພື່ອສັນຕິພາບ) ໄດ້ເຊັນບົດບັນທຶກຄວາມເຂົ້າໃຈ ແລະ ການຮ່ວມມື. ຝ່າຍລາວນໍາໂດຍທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ, ປະທານຄະນະສັນຕິພາບ ແລະ ສາມັກຄີ ຂອງລາວ ແລະ ຝ່າຍຣັດເຊຍນໍາໂດຍທ່ານ ນາງ ຊຸຕໍມີນາ ເອເລນາ ວາຊີລີແອັບນາ ຮອງປະທານຜູ້ທີໜຶ່ງ ກອງທຶນຣັດເຊຍເພື່ອສັນຕິພາບ. ໃນເນື້ອໃນບົດບັນທຶກຄວາມເຂົ້າໃຈ ສອງຝ່າຍໄດ້ເຫັນດີພົວພັນຮ່ວມມືນໍາກັນ ໃນການສົ່ງເສີມສັນຕິພາບ, ມະນຸດສະທໍາ ແລະ ວັດທະນະທໍາ ເພື່ອຜົນປະໂຫຍດຂອງສອງປະເທດ ທັງເປັນການສ້າງເງື່ອນໄຂເສີມສ້າງສັນຕິພາບ, ມິດຕະພາບ ແລະ ການຮ່ວມມື ເພື່ອການພັດທະນາ ໃນພາກພື້ນ ແລະ ໃນໂລກ.

ກອງທຶນລັດເຊຍເພື່ອສັນຕິພາບ ຫລື ມູນນິທິຣັດເຊຍເພື່ອສັນຕິພາບ ແມ່ນອົງການຈັດຕັ້ງທາງສັງຄົມສືບທອດມາຈາກກອງທຶນໂຊຫວຽດເພື່ອສັນຕິພາບ ທີ່ໄດ້ຮັບການສ້າງຕັ້ງຂຶ້ນໃນເດືອນເມສາ 1961 ໂດຍມີສາຂາຕັ້ງຢູ່ ໃນ 56 ເຂດ ທົ່ວສະຫະພັນຣັດເຊຍ ແລະ ຢູ່ຕ່າງປະເທດຈໍານວນໜຶ່ງ ກິດຈະກໍາຕົ້ນຕໍແມ່ນແນໃສ່ສົ່ງເສີມສັນຕິພາບ ມິດຕະພາບ ແລະ ຄວາມເຂົ້າໃຈລະຫວ່າງບັນດາປະຊາຊາດຕ່າງໆ ກໍຄືການພັດທະນາເພື່ອການຮ່ວມມືສາກົນ, ການປົກປັກຮັກສາສະພາບແວດລ້ອມ ແລະ ການແລກປ່ຽນທາງດ້ານວັດທະນະທໍາ ແລະ ວິທະຍາສາດ. ສ່ວນຄະນະສັນຕິພາບ ແລະ ສາມັກຄີຂອງລາວ ແມ່ນອົງການຈັດຕັ້ງສັງຄົມຂອງລາວ ມີບົດບາດໃນການເສີມສ້າງ ແລະ ສົ່ງເສີມບັນດາໂຄງການຮ່ວມມືໃນຂົງເຂດສັນຕິພາບ, ມິດຕະພາບ, ຍຸຕິທໍາ, ມະນຸດສະທໍາ, ວັດທະນະທໍາ ແລະ ການພັດທະນາລະຫວ່າງ ລາວ ແລະ ຕ່າງປະເທດ.




## ບໍ່ຈຳເປັນປ່ຽນດອກ

# ໂດຍ: ປ່າວກະບື

ທີ່ຮ້ານອາຫານແຫ່ງໜຶ່ງ, ຊາຍລູກຄ້າເວົ້າຮ້າຍໃສ່ຄົນເສີບ: "ນີ້ໆ ເບິ່ງນີ້, ມີແມງວັນຢູ່ຖ້ວຍເຝີຂ້ອຍ!"
"ຂໍອະໄພເນີທ່ານ... ຂ້ານ້ອຍຊິປ່ຽນຖ້ວຍໃໝ່ໃຫ້" ຝ່າຍຄົນເສີບເວົ້າແບບນອບນ້ອມ.
"ຊັ້ນ... ຂ້ອຍບໍ່ຈຳເປັນຈ່າຍຕີບໍ່?"
"ບໍ່ດອກ... ທ່ານບໍ່ຈຳເປັນຈ່າຍ"
"ເອີ... ຄັນຊັ້ນ ບໍ່ຈຳເປັນປ່ຽນຖ້ວຍໃໝ່ໃຫ້ກໍໄດ້ດອກ" ຊາຍລູກຄ້າເວົ້າຂຶ້ນ.

## NO NEED TO CHANGE

# By: BAOKBU

At a restaurant, the man said angrily to the waiter: "Look! there is a fly in my noodle soup!"
"Sir, excuse me. I will change it for you" the waiter said politely.
"Don't I have to pay for this one?"
"Sir, of course, you don't"
"Then, there is no need to change it at all" said the man.

# ສະພາຜູ້ແທນລາສະດອນຍີ່ປຸ່ນ ຮັບຮອງກົດໝາຍຫ້າມຂໍການບໍລິຈາກ

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ

*ສະພາຜູ້ແທນລາສະດອນຍີ່ປຸ່ນ ໄດ້ຮັບຮອງເອົາກົດໝາຍຫ້າມທຸກອົງການ ລວມທັງອົງການກ່ຽວຂ້ອງກັບສາສະໜາ ຂໍການບໍລິຈາກເງິນຈາກປະຊາຊົນ.*



ອີງຕາມການລາຍງານຂ່າວໃຫ້ຮູ້ວ່າ: ສະພາຜູ້ແທນລາສະດອນຍີ່ປຸ່ນ ໄດ້ມີມະຕິສຽງສ່ວນຫລາຍໃນກອງປະຊຸມເມື່ອວັນເສົາທີ 10 ທັນວາຜ່ານມາ ໄດ້ຮັບຮອງກົດໝາຍຫ້າມທຸກອົງການ ໂດຍສະເພາະແມ່ນອົງການທີ່ກ່ຽວຂ້ອງກັບສາສະໜາ ບໍ່ໃຫ້ຂໍການບໍລິຈາກເງິນ ແລະ ຊັບສິນຈາກປະຊາຊົນໃນທຸກກໍລະນີ.

ການເຄື່ອນໄຫວຄັ້ງນີ້ ຖືເປັນກໍລະນີທີ່ເກືອບບໍ່ເຄີຍມີມາກ່ອນ ທີ່ສະພາຜູ້ແທນລາສະດອນຍີ່ປຸ່ນຈະດຳເນີນກອງປະຊຸມໃນມື້ວັນພັກທ້າຍອາທິດ ເພື່ອປຶກສາຫາລືກ່ຽວກັບການຮ່າງກົດໝາຍຂັ້ນສຸດທ້າຍ ແລະ ລົງຄະແນນສຽງຮັບຮອງ ເຊິ່ງເນື້ອໃນສຳຄັນຂອງກົດໝາຍສະບັບດັ່ງກ່າວແມ່ນການຫ້າມອົງການຈັດຕັ້ງທາງສາສະໜາ "ສ້າງຄວາມສັບສົນ" ໃຫ້ປະຊາຊົນ ດ້ວຍຍຸດທະສາດສະເພາະ "ການສ້າງຄວາມຢ້ານ" ເພື່ອໃຫ້ປະຊາຊົນບໍລິຈາກເງິນ ຫລືຊັບສິນອື່ນໆ; ຖ້າສະມາຊິກຂອງອົງການຈັດຕັ້ງໃດໆທີ່ລະເມີດ ອາດຈະຖືກໂທດຈຳຄຸກເຖິງ 1 ປີ ຫລື ປັບໃໝເງິນເຖິງ 1 ລ້ານເຢນ (ປະມານ 126 ລ້ານກວ່າກີບ) ເຖິງແມ່ນວ່າອົງການທີ່ກ່ຽວຂ້ອງກະອ້າງວ່າ ເປັນການບໍລິຈາກດ້ວຍຄວາມສະໝັກໃຈ ແຕ່ຖ້າເປັນການກະທຳທີ່ເກີດຂຶ້ນຫລັງກົດໝາຍໃໝ່ມີຜົນບັງຄັບໃຊ້ແລ້ວ ຄູ່ສົມລົດ ແລະ ລູກທີ່ເປັນຍາດສາຍກົງຂອງຜູ້ໃຫ້ບໍລິຈາກ ສາມາດດຳເນີນການໄດ້ຕາມກົດໝາຍ.

ຢ່າງໃດກໍຕາມ, ລັດຖະບານຍີ່ປຸ່ນ ກໍຍັງຈະພິຈາລະນາ ແລະ ປະເມີນປະສິດທິພາບຂອງກົດໝາຍສະບັບນີ້ ພາຍໃນ 2 ປີທຳອິດຫລັງຈາກກົດໝາຍມີຜົນບັງຄັບໃຊ້ ເນື່ອງຈາກວ່າຍັງມີບັນຫາໂຕ້ຖຽງກັນກ່ຽວກັບສິດທິໃນການນຳໃຊ້ຊັບສິນ ແລະ ເສລີພາບໃນການນັບຖືສາສະໜາ ເຊິ່ງທັງສອງຢ່າງນີ້ແມ່ນໄດ້ຮັບການປົກປ້ອງພາຍໃຕ້ລັດຖະທຳມະນູນ.

**ແຫລ່ງຂໍ້ມູນ: REUTERS**

# ສ.ເກົາຫລີ ຍົກເລີກການນັບອາຍຸແບບດັ້ງເດີມ

ແປ ແລະ ຮຽບຮຽງ: ທະນາກອນ




ອີງຕາມການລາຍງານຂ່າວເມື່ອອາທິດຜ່ານມາ ໃຫ້ຮູ້ວ່າ: ສະພາຕໍ່າຂອງສາທາລະນະລັດເກົາຫລີ ຫລື ເກົາຫລີໃຕ້ ໄດ້ຜ່ານຮ່າງກົດໝາຍສະບັບໜຶ່ງໃນວັນພະຫັດທີ 8 ທັນວາ 2022 ເພື່ອຍົກເລີກການນັບອາຍຸແບບດັ້ງເດີມທີ່ເຄີຍປະຕິບັດກັນມາ ໂດຍປ່ຽນເປັນການນຳໃຊ້ການນັບອາຍຸຕາມມາດຕະຖານສາກົນ.

ການປ່ຽນແປງດັ່ງກ່າວ ຈະເຮັດໃຫ້ພົນລະເມືອງຂອງເກົາຫລີໃຕ້ຫລຸດອາຍຸນ້ອຍລົງ 1 ຫາ 2 ປີ ຈາກທີ່ໄດ້ລະບຸໄວ້ໃນເອກະສານຂອງລັດ ເຊິ່ງນັບແຕ່ເດືອນມິຖຸນາ 2023 ເປັນຕົ້ນໄປ ການນັບອາຍຸແບບດັ້ງເດີມຂອງເກົາຫລີໃຕ້ຈະບໍ່ຖືກນຳໃຊ້ໃນເອກະສານທາງການອີກຕໍ່ໄປ ແຕ່ຈະນຳໃຊ້ຕາມມາດຕະຖານທີ່ສາກົນໃຊ້ແທນ.

ສຳລັບການນັບອາຍຸທີ່ເປັນແບບປະເພນີດັ້ງເດີມຂອງພົນລະເມືອງເກົາຫລີໃຕ້ ເມື່ອເດັກເກີດໃໝ່ຈະມີອາຍຸ 1 ປີໃນທັນທີ ແລະ ຈະມີອາຍຸເພີ່ມອີກປີໜຶ່ງໃນທຸກໆວັນທີ 1 ມັງກອນ, ແຕ່ກົດໝາຍໃໝ່ທີ່ຫາກໍຖືກຮັບຮອງ ຈະເຮັດໃຫ້ເດັກນ້ອຍອາຍຸ 0 ປີເມື່ອເກີດໃໝ່ ແລະ ເພີ່ມໜຶ່ງປີໃນວັນເກີດຂອງຕົນເອງ.

ໃນໄລຍະຜ່ານມາ, ສຳລັບການເກນໄປຮັບໃຊ້ການທະຫານ ຫລື ດື່ມເຄື່ອງດື່ມທີ່ມີທາດເຫລົ້າ ແລະ ການສູບຢາ ກໍຕ້ອງໃຊ້ອາຍຸຕາມສາກົນ; ພ້ອມດຽວກັນນັ້ນ, ເອກະສານທາງການແພດ ແລະ ເອກະສານທີ່ກ່ຽວຂ້ອງກົດໝາຍ ກໍໄດ້ໃຊ້ອາຍຸຕາມແບບສາກົນຕັ້ງແຕ່ຕົ້ນຊຸມປີ 1960 ເປັນຕົ້ນມາແລ້ວ.

**ແຫລ່ງຂ່າວ: BBC**

## ຖະແຫລງ...

ວ່າ: ຂ້າພະເຈົ້າ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ມີຄວາມຍິນດີ ແລະ ຖືເປັນກຽດຢ່າງສູງ ແຈ້ງມາຍັງພະນັກງານ-ລັດຖະກອນ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າ ໃນທົ່ວປະເທດ ແລະ ພີ່ນ້ອງເຊື້ອຊາດລາວທີ່ອາໃສຢູ່ຕ່າງປະເທດ ຮັບຊາບຕໍ່ຜົນສຳເລັດຂອງການຄົ້ນຄວ້າ ແລະ ພິຈາລະນາວຽກງານໃນຂົງເຂດວັດທະນະທຳ-ສັງຄົມ ກ່ຽວກັບການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ການສ້າງວຽກເຮັດງານທຳ ໃຫ້ປະຊາຊົນບັນດາເຜົ່າ.

ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໃນຄັ້ງວັນທີ 9 ທັນວາ 2022 ໄດ້ຮັບຟັງການລາຍງານໂດຍສັງເຂບຈາກລັດຖະບານ ທີ່ນຳສະເໜີໂດຍທ່ານລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ; ຫລັງຈາກນັ້ນ, ຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ຂຶ້ນມີຄຳເຫັນຕໍ່ບົດລາຍງານດັ່ງກ່າວ, ບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ສຸມໃສ່ຄົ້ນຄວ້າ ແລະ ປະກອບຄວາມຄິດເຫັນຢ່າງກົງໄປກົງມາດ້ວຍຄວາມຮັບຜິດຊອບສູງ ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ, ພ້ອມທັງສະເໜີວິທີການ ແລະ ມາດຕະການ ເພື່ອໃຫ້ລັດຖະບານ ກໍຄືພາກສ່ວນກ່ຽວຂ້ອງນຳໄປຄົ້ນຄວ້າ, ປັບປຸງ ວຽກງານດັ່ງກ່າວໃຫ້ມີຜົນສຳເລັດດີຂຶ້ນ.

ຜູ້ແທນສ່ວນຫລາຍ ແມ່ນເຫັນດີເປັນເອກະພາບ ແລະ ຊົມເຊີຍຕໍ່ລັດຖະບານ ທີ່ໄດ້ເອົາໃຈໃສ່ວຽກງານສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ການສ້າງວຽກເຮັດງານທຳໃຫ້ປະຊາຊົນບັນດາເຜົ່າ ເພື່ອແກ້ໄຂບັນຫາການວ່າງງານ ເຊິ່ງໄລຍະຜ່ານມາ ເຫັນວ່າອັດຕາການວ່າງງານຫລຸດລົງເຫລືອພຽງ 18% ແຕ່ເຖິງຢ່າງໃດກໍຕາມ ຜ່ານການຕິດຕາມກວດກາຕົວຈິງຂອງສະພາແຫ່ງຊາດ, ຜູ້ແທນຍັງສະແດງຄວາມເປັນຫ່ວງເປັນໃຍ ແລະ ສະເໜີໃຫ້ລັດຖະບານເອົາໃຈໃສ່ແກ້ໄຂບາງດ້ານ ດັ່ງນີ້:

1. ການສ້າງ, ປັບປຸງບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງກັບການສ້າງວິຊາຊີບ, ການພັດທະນາສີມືແຮງງານ, ການຈັດຫາວຽກເຮັດງານທຳທີ່ມີແລ້ວ ໃຫ້ສອດຄ່ອງກັບການຂະຫຍາຍຕົວ ຂອງເສດຖະກິດ-ສັງຄົມໃນປັດຈຸບັນ ໃຫ້ເປັນລະບົບຄົບຊຸດຕື່ມ;

2. ສະເໜີລັດຖະບານ ຄົ້ນຄວ້າ, ພິຈາລະນາການລົງທຶນສ້າງ ແລະ ປັບປຸງລະບົບຖານຂໍ້ມູນ-ຂ່າວສານກ່ຽວກັບແຮງງານ, ອັດຕາການວ່າງງານ, ຕະຫລາດແຮງງານພາຍໃນ ແລະ ຕ່າງປະເທດ ໃຫ້ລວມສູນ, ເປັນເອກະພາບ, ຊັດເຈນ ແລະ ເປັນລະບົບທັນສະໄໝ, ສາມາດເຊື່ອມໂຍງ ແລະ ເຂົ້າເຖິງໄດ້ງ່າຍໃນຂອບເຂດທົ່ວປະເທດ;

3. ສະເໜີໃຫ້ລັດຖະບານ ຄົ້ນຄວ້າເພີ່ມຄ່າແຮງງານຂັ້ນຕ່ຳ ເພື່ອເປັນການປັບປຸງຊີວິດການເປັນຢູ່ຂອງຜູ້ອອກແຮງງານໃຫ້ດີຂຶ້ນ ທັງເປັນແຮງຈູງໃຈໃຫ້ຜູ້ອອກແຮງງານ ແລະ ຮັບປະກັນການມີສະຫວັດດີການທີ່ດີໃຫ້ແກ່ຜູ້ອອກແຮງງານ ຕາມກົດໝາຍກຳນົດ;

- ສະເໜີເພີ່ມອັດຕາເບ້ຍລ້ຽງໃຫ້ນັກຮຽນຢູ່ໂຮງຮຽນກິນນອນຊົນເຜົ່າ, ໂຮງຮຽນເຕັກນິກວິຊາຊີບ ໃຫ້ແທດເໝາະກັບຄ່າຄອງຊີບແຕ່ລະໄລຍະ ພ້ອມທັງສະໜອງງົບປະມານ ໃຫ້ທັນກຳນົດເວລາ;

4. ຄົ້ນຄວ້າສ້າງ ແລະ ປັບປຸງພື້ນຖານໂຄງລ່າງ, ສະໜອງອຸປະກອນການຮຽນ-ການສອນ, ສ້າງສະພາບແວດລ້ອມທີ່ເອື້ອອຳນວຍ ເພື່ອສ້າງແຮງຈູງໃຈໃຫ້ນັກຮຽນມາຮຽນ, ລວມທັງຈັດສັນຄູສອນໃຫ້ພຽງພໍ;

5. ປັບປຸງ ແລະ ພັດທະນາຫລັກສູດ, ວິທີການຮຽນ-ການສອນ, ການເຝິກວິຊາຊີບ ແລະ ການພັດທະນາສີມືແຮງງານ ໃຫ້ໄດ້ມາດຕະຖານສອດຄ່ອງກັບຍຸກການພັດທະນາອຸດສາຫະກຳ 4.0, ເຕັກໂນໂລຊີດ້ານຂໍ້ມູນ ແລະ ການສື່ສານ, ທັກສະດ້ານພາສາຕ່າງປະເທດ;

6. ຊຸກຍູ້ ແລະ ສົ່ງເສີມໃຫ້ພາກເອກະຊົນ ມີສ່ວນຮ່ວມໃນການລົງທຶນ ໃສ່ວຽກງານການເຝິກວິຊາຊີບ, ການພັດທະນາສີມືແຮງງານ ແລະ ການສ້າງວຽກເຮັດງານທຳແກ່ປະຊາຊົນລາວບັນດາເຜົ່າ ໂດຍສະເພາະຢູ່ເຂດຊົນນະບົດ, ຫ່າງໄກສອກຫລີກ;

7. ຊຸກຍູ້ໃຫ້ມີສ່ວນຮ່ວມຂອງບັນດາຫົວໜ່ວຍທຸລະກິດ ກັບໂຮງຮຽນເຕັກນິກ-ວິຊາຊີບ, ສູນ, ສະຖາບັນພັດທະນາສີມືແຮງງານ ເພື່ອສ້າງແຜນພັດທະນາສີມືແຮງງານຮ່ວມກັນ, ພ້ອມທັງສ້າງເງື່ອນໄຂທີ່ເໝາະສົມໃນການເຂົ້າເຖິງແຫລ່ງທຶນ ເພື່ອປະກອບອາຊີບດ້ວຍຕົນເອງ;

8. ຈັດງານຕະຫລາດນັດແຮງງານ ໂດຍການມີສ່ວນຮ່ວມຂອງຫລາຍພາກສ່ວນ ເປັນແຕ່ລະໄລຍະຢູ່ແຕ່ລະທ້ອງຖິ່ນ ເພື່ອໃຫ້ແຮງງານລາວໄດ້ມີໂອກາດເຂົ້າເຖິງຕະຫລາດແຮງງານຫລາຍຂຶ້ນກວ່າເກົ່າ;

9. ເອົາໃຈໃສ່ພັດທະນາລະບົບການສະໜອງຂໍ້ມູນຂ່າວສານ ໂດຍຜ່ານພາຫະນະສື່ມວນຊົນ, ສື່ອອນລາຍ ກ່ຽວກັບການຮຽນວິຊາຊີບ ແລະ ໂຄສະນາເຜີຍແຜ່ໃຫ້ຜູ້ປົກຄອງ, ນັກຮຽນເຫັນໄດ້ຄວາມສຳຄັນຂອງການຮຽນວິຊາຊີບ, ການພັດທະນາສີມືແຮງງານ ແລະ ການສ້າງອາຊີບ ພ້ອມທັງສົ່ງເສີມໃຫ້ມີການພັດທະນາປຶ້ມແບບຮຽນ, ສົ່ງເສີມວັດທະນະທຳການອ່ານ ແລະ ການຮຽນຮູ້ກ່ຽວກັບການສ້າງວິຊາຊີບ, ວຽກເຮັດງານທຳໃຫ້ຫລາຍຂຶ້ນ;

10. ເພີ່ມທະວີການໂຄສະນາເຜີຍແຜ່ກົດໝາຍ ແລະ ນິຕິກຳກ່ຽວກັບບັນຫາແຮງງານ, ການປົກປ້ອງສັງຄົມ ເພື່ອໃຫ້ຜູ້ອອກແຮງງານ ແລະ ຜູ້ໃຊ້ແຮງງານ ໄດ້ຮັບການປົກປ້ອງຕາມກົດໝາຍກຳນົດ.

ທັງໝົດນັ້ນ, ແມ່ນໄດ້ສະແດງເຖິງຄວາມຮັບຜິດຊອບໜ້າທີ່ການເມືອງຂອງລັດຖະບານ ໃນການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ການສ້າງວຽກເຮັດງານທຳໃຫ້ປະຊາຊົນ ເພື່ອແກ້ໄຂບັນຫາວ່າງງານ ແລະ ຫລຸດຜ່ອນອັດຕາການວ່າງງານ ໃຫ້ຍັງເຫລືອ 15% ໃນປີ 2025.

## ກອງປະຊຸມ...

ຄຳເຫັນຢ່າງມີລັກສະນະສ້າງສັນ ແລະ ກົງໄປກົງມາ ເພື່ອເຮັດໃຫ້ເນື້ອໃນຂອງບັນດາກົດໝາຍດັ່ງກ່າວ ມີຄວາມຖືກຕ້ອງ, ສອດຄ່ອງ, ແທດເໝາະ ແລະ ສາມາດນຳໄປຈັດຕັ້ງປະຕິບັດຕົວຈິງ ໃຫ້ເກີດປະໂຫຍດສູງສຸດຕໍ່ປະຊາຊົນ ກໍຄືປະເທດຊາດ.

ໃນທີ່ປະຊຸມ, ຍັງໄດ້ຮັບຟັງການໃຫ້ຄວາມກະຈ່າງແຈ້ງຈາກອະນຸກຳມະການຮັບຜິດຊອບຮ່າງກົດໝາຍທັງ 5 ສະບັບດັ່ງກ່າວ ຕາມຄຳຊັກຖາມ ແລະ ເຈາະຈີ້ມຂອງບັນດາທ່ານ ສສຊ ຕື່ມອີກ. ພ້ອມດຽວກັນນີ້, ປະທານກອງປະຊຸມ ໄດ້ສະຫລຸບສັງລວມການປະກອບຄຳເຫັນຂອງກອງປະຊຸມ ເພື່ອໃຫ້ພາກສ່ວນທີ່ຮັບຜິດຊອບໄດ້ນຳໄປພິຈາລະນາ ແລະ ປັບປຸງໃຫ້ມີຄວາມຖືກຕ້ອງສອດຄ່ອງຍິ່ງຂຶ້ນ.

(ນາງ ປາກາລັກ ພົມມີໄຊ)





| ຜູ້ຊີ້ນຳ | ຄະນະຊ່ຽວຊານທີ່ປຶກສາ | ຫົວໜ້າບັນນາທິການ | ກອງບັນນາທິການ | ອອກແບບຈັດໜ້າ |
|---|---|---|---|---|
| ທ່ານ ສິງຄຳ ວົງພະຈັນ | ທ່ານ ສີສຸພັນ ແສງສະຫວັນ<br>ທ່ານ ວິເສດ ສະແຫວງສຶກສາ<br>ທ່ານ ຄຳວິສັນ ແກ້ວສຸວັນ | ທ່ານ ປອ. ພົດສະໄໝ ບຸນວິໄລ<br>ທ່ານ ຂັນທະວີ ວົງພະຈັນ<br>ທ່ານ ເປຄຳ ລໍຄຳສອນ | ທ່ານ ນາງ ກົງໃຈ ແສງອຳພັນ<br>ທ່ານ ນາງ ສຸພາວັນ ທອມສະນິດ<br>ທ່ານ ນາງ ປາກາລັກ ພົມມີໄຊ | ທ່ານ ນາງ ກຸກກິກ ບຸດດາໄຊ<br>ທ່ານ ສົມນຶກ ແກ້ວໄຊຍະຈັກ |